ພະຍາກອນ ອຽງຈັນ
19–28°C
ວັນພຸດ 25/11 · ແຈ່ມໃສ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນພຸດ 25 ພະຈິກ 2026 · ສະບັບທີ 029 | ສະຫຼຸບຂ່າວປະຈຳວັນອັງຄານ 24 ພະຈິກ 2026 · 24 ຂ່າວ | 21 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ຂ່າວຕ່າງປະເທດ** · 15:04 ໂມງ · ອ່ານ 17 ຄັ້ງ

ປະທານາທິບໍດີ ໂດນັລ ທຣຳ ມີຄຳສັ່ງໃຫ້ກະຊວງຍຸຕິທຳສະຫະລັດ ຊຸກຍູ້ການນຳໂທດປະຫານມາໃຊ້ກັບຜູ້ທີ່ຖືກຕັດສິນວ່າຄາດຕະກຳເດັກນ້ອຍ



ປະທານາທິບໍດີ ໂດນັລ ທຣຳ (Donald Trump) ແຫ່ງສະຫະລັດ ໄດ້ລົງນາມໃນຄຳສັ່ງປະທານາທິບໍດີ ເມື່ອວັນທີ 23 ພະຈິກ 2026 ໂດຍມອບໝາຍໃຫ້ກະຊວງຍຸຕິທຳສະຫະລັດຊຸກຍູ້ການຂໍໃຫ້ສານລົງໂທດປະຫານຊີວິດຕໍ່ຜູ້ກະທຳຜິດໃນຄະດີຄາດຕະກຳຮ້າຍແຮງລະດັບລັດຖະບານກາງ ລວມທັງຄະດີຄາດຕະກຳເດັກ, ການຄາດຕະກຳທີ່ກ່ຽວຂ້ອງກັບການຂົ່ມຂືນ ຫລື ການລ່ວງລະເມີດທາງເພດ ແລະ ການຄ້າມະນຸດ.

ຕາມເອກະສານຄຳສັ່ງທີ່ເຜີຍແຜ່ຜ່ານເວັບໄຊ

ຕໍ່ໜ້າ 2

◆ **ຂ່າວຕ່າງປະເທດ** · 13:21 ໂມງ

ເກີດເຫດລະເບີດຮຸນແຮງກາງເມືອງຫລວງຮ່າໂນ້ຍ ເຮືອນມຸ່ນຖະຫຼົ່ມລົງມາ ເສຍຊີວິດ 2 ຄົນ ບາດເຈັບ 11 ຄົນ



ຮ່າໂນ້ຍ, ຫວຽດນາມ: ເກີດເຫດລະເບີດຢ່າງຮຸນແຮງຢູ່ເລກທີ 168 ຖະໜົນ ຫງວຽນວັນເຕອຍດ ເຂດດົງດາ ກຸງຮ່າໂນ້ຍ ປະເທດຫວຽດນາມ ໃນເວລາປະມານ 08:05 ໂມງ ຂອງວັນທີ 24 ພະຈິກ 2026 ສົ່ງຜົນໃຫ້ອາຄານຮ້ານຄ້າສູງ 1 ຊັ້ນມຸ່ນຖະຫຼົ່ມລົງມາ ແລະ ມີຜູ້ເສຍຊີວິດ 2 ຄົນ ບາດເຈັບ 11 ຄົນ.

ຕາມລາຍງານຂອງສຳນັກຂ່າວລັດຖະບານຫວຽດນາມ ລະບຸວ່າ ຫຼັງຈາກໄດ້ຮັບແຈ້ງເຫດ ຕຳຫຼວດນະຄອນຮ່າໂນ້ຍໄດ້ລະດົມກຳລັງດັບເພີງ ແລະກູ້ໄພເຂົ້າຊ່ວຍເຫຼືອຢ່າງຮີບດ່ວນ ພ້ອມນຳໃຊ້ອຸປະກອນກູ້ໄພສະເພາະທາງ ແລະໝາກູ້ໄພ ເພື່ອ

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວຕ່າງປະເທດ
3 ຂ່າວພາຍໃນ
11 ທ່ອງທ່ຽວ
11 ເຕັກໂນໂລຊີ
19 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
20 ແຈ້ງການ
21 ກິລາ



◆ **ແຈ້ງການ** · 16:11 ໂມງ

ແຈ້ງການມອດໄຟ ວັນທີ 26,27,29/11/2026

ອ່ານໜ້າ 20 ▸



◆ **ຂ່າວຕ່າງປະເທດ** · 11:10 ໂມງ

ປົດຄະດີສະເທືອນຂວັນ! ຕຳຫຼວດສືບນະຄອນບານແກະຮ...

ອ່ານໜ້າ 12 ▸



◆ **ຂ່າວພາຍໃນ** · 10:11 ໂມງ

ສຳເລັດແລ້ວ ເສັ້ນທາງເບຕົ້ງ ຖ້ວແບບ ຊາວໜຸ່ມ ໄລຍະທີ 1 ...

ອ່ານໜ້າ 3 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ປະທານາທິບໍດີ ໂດນັລ ທຣຳ ມີຄຳສັ່ງໃຫ້ກະຊວງຍຸຕິທຳສະຫະລັ... (ຕໍ່ຈາກໜ້າ 1)

ທາງການຂອງທຳນຽບຂາວ ລະບຸວ່າ ທ່ານ ທຣຳ (Trump) ໄດ້ສັ່ງໃຫ້ລັດຖະມົນຕີ ຍຸຕິທຳ ດຳເນີນມາດຕະການທາງກົດໝາຍ ເພື່ອຂໍໃຫ້ສານນຳໃຊ້ໂທດປະຫານຊີວິດ ກັບຄະດີຄາດຕະກຳຮ້າຍແຮງບາງປະເພດ ໂດຍຂະຫຍາຍຂອບເຂດຈາກຄຳສັ່ງທີ່ ລັດຖະບານອອກກ່ອນໜ້ານີ້.

ຄະດີທີ່ຢູ່ໃນຂອບເຂດຄຳສັ່ງດັ່ງກ່າວ ປະກອບມີ:

ການຄາດຕະກຳຂັ້ນທີ 1 ຕໍ່ເດັກນ້ອຍ (ບຸກຄົນທີ່ມີອາຍຸຍັງບໍ່ທັນຄົບ 18 ປີບໍລິບູນ).

ການຄາດຕະກຳທີ່ເກີດຂຶ້ນໃນ ລະຫວ່າງການຂົ່ມຂືນ ຫຼື ການລ່ວງ ລະເມີດທາງເພດ.

ການຄາດຕະກຳທີ່ກ່ຽວຂ້ອງກັບ ການຊຸດຮີດທາງເພດເດັກ ຫຼື ການຄ້າປະ ເວນີມະນຸດ.

ການຄາດຕະກຳໃນລະຫວ່າງການ ລັກພາຕົວ ຫຼື ການຄ້າມະນຸດ.

ນອກຈາກນີ້ ຄຳສັ່ງຍັງກຳນົດໃຫ້ ກະຊວງຍຸຕິທຳເລັ່ງລັດຂະບວນການບັງຄັບ ໃຊ້ໂທດປະຫານຊີວິດ ສຳລັບນັກໂທດທີ່ ຖືກສານລັດຖະບານກາງຕັດສິນແລ້ວ ໂດຍ ໃຫ້ເລັ່ງການພິຈາລະນາຄຳຮ້ອງອຸທອນ ຄັດຄ້ານການຖ່ວງເວລາທາງກົດໝາຍ ແລະຫຼຸດຂັ້ນຕອນທາງບໍລິຫານທີ່ບໍ່ຈຳເປັນ.

ການອອກຄຳສັ່ງຄັ້ງນີ້ ເກີດຂຶ້ນ ທ່າມກາງຄວາມຂັດແຍ້ງລະຫວ່າງ ທ່ານ ທຣຳ (Trump) ກັບ ທ່ານ ແກວິນ ນິວ ຊຳ (Gavin Newsom) ຜູ້ວ່າການລັດ ຄາລິຟໍເນຍ ກ່ຽວກັບນະໂຍບາຍໂທດ ປະຫານຊີວິດ.

ກ່ອນໜ້ານີ້ ທ່ານ ນິວຊຳ (Newsom) ໄດ້ປະກາດແຜນການປ່ຽນ ໂທດປະຫານຊີວິດຂອງນັກໂທດ 548 ຄົນໃນລັດ ຄາລິຟໍເນຍ ໃຫ້ເປັນໂທດຈຳ ຄຸກຕະຫຼອດຊີວິດໂດຍບໍ່ມີສິດຂໍປ່ອຍຕົວ. ຂະນະທີ່ ທ່ານ ທຣຳ ໄດ້ວິຈານແຜນການ ດັ່ງກ່າວ ໂດຍກ່າວວ່າເປັນການບໍ່ໃຫ້ຄວາມ ເປັນທຳກັບຄອບຄົວຂອງຜູ້ເຄາະຮ້າຍ.

ທັງນີ້ ອຳນາດຂອງປະທານາທິບໍດີ ສະຫະລັດໃນການອອກຄຳສັ່ງດັ່ງກ່າວ ຄອບຄຸມສະເພາະຄະດີທີ່ຢູ່ໃນຂອບເຂດ ອຳນາດຂອງລັດຖະບານກາງ ແລະ ບໍ່ ສາມາດສັ່ງຍົກເລີກການຕັດສິນໃຈດ້ານ ການຫຼຸດຜ່ອນໂທດຂອງລັດ ຄາລິຟໍເນຍ ໄດ້ໂດຍກົງ.

ນະໂຍບາຍໂທດປະຫານຊີວິດຍັງ ເປັນປະເດັນທີ່ມີການຖົກຖຽງໃນສັງຄົມ ສະຫະລັດ. ຝ່າຍສະໜັບສະໜຸນເຫັນວ່າ ໂທດປະຫານຊີວິດເປັນບົດລົງໂທດທີ່ ສົມຄວນສຳລັບອາຊະຍາກຳຮ້າຍແຮງທີ່ສຸດ ແລະເປັນການສ້າງຄວາມເປັນທຳໃຫ້ແກ່ ຄອບຄົວຜູ້ເຄາະຮ້າຍ.

ຂະນະທີ່ຝ່າຍຄັດຄ້ານມີຄວາມ ກັງວົນກ່ຽວກັບຄວາມຜິດພາດໃນການ ພິພາກສາ, ຄວາມບໍ່ເທົ່າທຽມໃນການນຳ ໃຊ້ກົດໝາຍ ແລະ ຄວາມສ່ຽງທີ່ຜູ້ບໍລິສຸດ ອາດຖືກລົງໂທດປະຫານຊີວິດ.

ຢ່າງໃດກໍຕາມ ຄຳສັ່ງຂອງ ທ່ານ ທຣຳ (Trump) ບໍ່ໄດ້ໝາຍຄວາມວ່າຜູ້ ຖືກຕັດສິນວ່າຄາດຕະກຳເດັກທຸກຄົນຈະ ຖືກປະຫານຊີວິດໂດຍອັດຕະໂນມັດ ເນື່ອງ ຈາກການນຳໃຊ້ໂທດດັ່ງກ່າວຍັງຕ້ອງຜ່ານ ຂະບວນການພິຈາລະນາຂອງສານ ແລະ ຕ້ອງເປັນໄປຕາມກົດໝາຍຂອງສະຫະລັດ.

ແຫຼ່ງຂ່າວອ້າງອີງ:

The White House – ເອກະສານຄຳສັ່ງປະທານາທິບໍດີ

Reuters – Trump criticizes Governor Newsom for commuting California death sentences

Associated Press – Trump targets Newsom and Democrats

ລັດ California – ເອກະສານ ກ່ຽວກັບການປ່ຽນໂທດນັກໂທດ

ເກີດເຫດລະເບີດຮຸນແຮງກາງເມືອງຫລວງຮ່າໂນ້ຍ ເຮືອນມຸ່ນຖະ... (ຕໍ່ຈາກໜ້າ 1)

ຄົ້ນຫາຜູ້ທີ່ອາດຕິດຄ້າງຢູ່ໃຕ້ຊາກອາຄານ.

ຂໍ້ມູນຈາກເຈົ້າໜ້າທີ່ລະບຸວ່າ ເມື່ອ ເວລາ 10:30 ໂມງ ສາມາດນຳຜູ້ບາດເຈັບ ອອກຈາກຈຸດເກີດເຫດໄດ້ 11 ຄົນ ແລະ ພົບຜູ້ເສຍຊີວິດ 2 ຄົນ ກ່ອນສົ່ງຕໍ່ໃຫ້ທີມ ແພດເພື່ອດຳເນີນການຕາມຂັ້ນຕອນ.

ສ່ວນສາເຫດເບື້ອງຕົ້ນ ເຈົ້າໜ້າທີ່ ສົງໃສວ່າອາດເກີດຈາກແກັສລະເບີດ ເຮັດ ໃຫ້ອາຄານຮ້ານຄ້າທີ່ຢູ່ດ້ານຫຼັງອາຄານພັກ ອາໄສ E4 ພັງຖະຫຼົ່ມບາງສ່ວນ. ແຮງ ລະເບີດຍັງສົ່ງຜົນກະທົບຕໍ່ອາຄານໃກ້ຄຽງ ເຮັດໃຫ້ກະຈົກແຕກ ແລະຊັບສິນຂອງ ປະຊາຊົນເສຍຫາຍ.

ຂະນະດຽວກັນ ທາງການໄດ້ສັ່ງໃຫ້ ປະຊາຊົນທີ່ອາໄສຢູ່ໃນອາຄານພັກອາໄສ E3 ແລະ E4 ອົບພະຍົບອອກຈາກພື້ນທີ່ ສ່ຽງ ເພື່ອກວດສອບຄວາມໝັ້ນຄົງຂອງ ໂຄງສ້າງອາຄານ ແລະປ້ອງກັນອັນຕະລາຍ ທີ່ອາດເກີດຂຶ້ນ.

ປັດຈຸບັນ ເຈົ້າໜ້າທີ່ກູ້ໄພ ແລະ ຕຳຫຼວດຫວຽດນາມຍັງສືບຕໍ່ກວດຄົ້ນ ພື້ນທີ່ ພ້ອມທັງສືບສວນຫາສາເຫດທີ່ ແນ່ນອນ ແລະປະເມີນຄວາມເສຍຫາຍ ທັງໝົດ.

ທີ່ມາ: VTV ໂທລະພາບແຫ່ງຊາດ ຫວຽດນາມ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ຂ່າວພາຍໃນ · 10:11 ໂມງ · ອ່ານ 10 ຄັ້ງ

ສຳເລັດແລ້ວ ເສັ້ນທາງເບຕົ້ງ ຕ໊ອແບບຊາວໜຸ່ມ ໄລຍະທີ 1 ຢູ່ເມືອງປາກຊັນ ແຂວງ ບໍລິຄຳໄຊ ມູນຄ່າກວ່າ 429 ລ້ານກີບ



ພິທີເປີດນຳໃຊ້ເສັ້ນທາງເບຕົ້ງເສີມເຫຼັກຕ໊ອແບບຊາວໜຸ່ມ ຢຸ່ເຂດຊາຍແດນ ລະຫວ່າງ ບ້ານໂພສີ ແລະ ບ້ານມີໄຊ ຕາ ແສງໄຊຈະເລີນ ເມືອງປາກຊັນ ແຂວງບໍລິ ຄຳໄຊ ໄດ້ຈັດຂຶ້ນເປັນທາງການ ໃນ ຕອນເຊົ້າຂອງວັນທີ 23 ພະຈິກ 2026 ໃຫ້ກຽດເຂົ້າຮ່ວມພິທີຂອງ ທ່ານ ທອງລີ ສີສຸລິດ ເລຂາຄະນະບໍລິຫານງານສູນກາງ ຊາວໜຸ່ມປະຊາຊົນປະຕິວັດລາວ, ທ່ານ ຄຳ ແຫວນ ປັນຍານຸວົງ ປະທານຄະນະ ກຳມະການປົກຄອງແຂວງບໍລິຄຳໄຊ, ມີການນຳຂັ້ນແຂວງ, ຂັ້ນເມືອງ ປະຊາຊົນ ພາຍໃນ 2 ບ້ານ ແລະ ແຂກຖືກເຊີນ ເຂົ້າຮ່ວມ.

ໂຄງການກໍ່ສ້າງເສັ້ນທາງເບຕົ້ງເສີມ ເຫຼັກຕ໊ອແບບຊາວໜຸ່ມໄລຍະທີ 1 ຢຸ່ເຂດ ຊາຍແດນລະຫວ່າງ ບ້ານໂພສີ ແລະ ບ້ານ ມີໄຊ ຕາແສງໄຊຈະເລີນ ເມືອງປາກຊັນ ແຂວງບໍລິຄຳໄຊ ໄດ້ເລີ່ມລົງມືກໍ່ສ້າງມາ ຕັ້ງແຕ່ວັນທີ 19 ຕຸລາ 2026 ເປັນຕົ້ນມາ ໄດ້ສຳເລັດການກໍ່ສ້າງໃນວັນທີ 10 ພະຈິກ 2026 ເສັ້ນທາງດັ່ງກ່າວມີຄວາມຍາວ ທັງໝົດ 530 ແມັດ, ເຊິ່ງໃນໄລຍະທຳອິດ ກໍ່ສ້າງສຳເລັດ 230 ແມັດ, ມີຄວາມກວ້າງ 7 ແມັດ ແລະ ໜາ 15-20 ຊັງຕີແມັດ. ໂດຍການນຳພາການກໍ່ສ້າງຂອງຄະນະ ຊາວໜຸ່ມແຂວງບໍລິຄຳໄຊ, ດ້ານາດຕະຖານ ແລະ ເຕັກນິກ ແມ່ນຫ້ອງການ ຍທຂ ເມືອງ, ລວມມູນຄ່າການກໍ່ສ້າງທັງໝົດ ແມ່ນ 429,082,000 ກີບ, ເຊິ່ງໄດ້ຮັບ ການສະໜັບສະໜູນງົບປະມານຫຼັກຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຊປປລ) ຈຳນວນ 387,000,000 ກີບ, ອົງການປົກຄອງແຂວງ ແລະ ເມືອງ ປາກຊັນ, ສົມທົບທຶນ 20,000,000 ກີບ ເຂົ້າໃນໜ້າວຽກປັບປຸງ ແລະ ຖົມດິນ ແດງ, ຄອບຄົວ ທ່ານ ເພັດສະໄໝ ໄຊຍະ ທິຈັກ ແລະ ທ່ານ ອຸດົມວົງ ໄກສອນ ປະກອບສ່ວນເງິນສົດ 12,800,000 ກີບ, ໂດຍໄດ້ຮັບກຳລັງແຮງງານຈາກ ອົງການປົກຄອງເມືອງ, ພະນັກງານຕາແສງ ໄຊຈະເລີນ, ກຳລັງຊາວໜຸ່ມຕະລຸມບອນ ຈຳນວນ 161 ແຮງງານ ແລະ ການ ປະກອບສ່ວນແຮງງານຈາກພໍ່ແມ່ປະຊາຊົນ ພາຍໃນສອງບ້ານ 210 ແຮງງານd

ຜົນສຳເລັດຂອງໂຄງການກໍ່ສ້າງ ເສັ້ນທາງໃນຄັ້ງນີ້ ສະແດງໃຫ້ເຫັນເຖິງ ຄວາມເອົາໃຈໃສ່ນຳພາ-ຊີ້ນຳ ຂອງ ຄະນະພັກ, ອຳນາດການປົກຄອງແຕ່ລະ ຂັ້ນ ຕະຫຼອດຮອດຄວາມສາມັກຄີເປັນຈິດ ໜຶ່ງໃຈດຽວຂອງຖັນແຖວຊາວໜຸ່ມ ແລະ ປະຊາຊົນ ໃນການປະກອບສ່ວນ ພັດທະນາພື້ນຖານໂຄງລ່າງໃຫ້ມີຄວາມ ສະດວກສະບາຍ. ເພື່ອຢັ້ງຢືນເຖິງຜົນງານ ການປະກອບສ່ວນສ້າງສາພັດທະນາ ປະເທດຊາດ ທ່ານ ຄຳແຫວນ ປັນຍານຸວົງ ຕາງໜ້າໃຫ້ຄະນະກຳມະການປົກຄອງ ແຂວງຍັງໄດ້ໃຫ້ກຽດມອບ ໃບຍ້ອງຍໍໃຫ້ ສູນກາງ ຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ທ່ານ ສຸລິຈັນ ທ່ຽງຈັນໄຊ ຮອງ ປະທານຄະນະກຳມະການປົກຄອງ ເມືອງ ປາກຊັນ ໄດ້ມອບໃບຍ້ອງຍໍໃຫ້ ເລຂາ ຄະນະບໍລິຫານງານຊາວໜຸ່ມແຂວງ ຢ່າງ ສົມກຽດ.

ຂ່າວ-ພາບ: ສາຍສະໝອນ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 19 ໃນສະບັບນີ້

ຂ່າວພາຍໃນ · 10:24 ໂມງ · ອ່ານ 8 ຄັ້ງ

ຜົນກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນພະຈິກ 2026



ໃນຕອນແລງຂອງວັນທີ 23 ພະຈິກ 2026 ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ຄຳຜາ ພິມມະສອນ ຮອງລັດຖະມົນຕີ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ຖະແຫຼ່ງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນພະ ຈິກ 2026 ວ່າ: ກອງປະຊຸມດັ່ງກ່າວ, ໄດ້ດຳເນີນໃນວັນທີ 23 ພະຈິກ 2026 ທີ່ສຳນັກງານນາຍົກລັດຖະມົນຕີ, ພາຍ ໃຕ້ການເປັນປະທານ ຂອງທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ, ມີບັນດາຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ເຂົ້າຮ່ວມແບບເຊິ່ງໜ້າ, ບັນ ດາ ປະທານ,ຮອງປະທານ ແລະ ຜູ້ຕາງໜ້າອົງການປົກຄອງ ທ້ອງຖິ່ນ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກ ເພື່ອຮັບ ຟັງ ແລະ ປະກອບຄຳເຫັນ ຕໍ່ການລາຍງານສະພາບພື້ນເດັ່ນ ປະຈຳເດືອນພະຈິກ ແລະ ທິດທາງແຜນ ວຽກຈຸດສຸມ ປະຈຳເດືອນທັນວາ 2026.

ກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳເຫັນ ຕໍ່ 04 ວາລະສຳຄັນ ຄື: ວາລະທີ 1 ກອງປະຊຸມ ເຫັນດີດ້ານຫລັກການ ຮັບຮອງເອົາການ ສະຫລຸບວຽກຈຸດສຸມພື້ນເດັ່ນ ປະຈຳ ເດືອນພະຈິກ ແລະ ທິດທາງແຜນການ ປະຈຳເດືອນທັນວາ 2026 ຂອງ ລັດຖະບານ. ໃນນັ້ນ, ຕໍ່ການສະຫລຸບ ວຽກງານພື້ນເດັ່ນ ປະຈຳເດືອນພະຈິກ 2026 ຂອງລັດຖະບານ: ກອງປະຊຸມ ໄດ້ ຕີລາຄາວ່າ ເຖິງສະພາບການສາກົນ ແລະ ພາກພື້ນ ຍັງສືບຕໍ່ຜັນແປໄປຢ່າງສັບສົນ ແລະ ຄາດເດົາໄດ້ຍາກ, ແຕ່ລັດຖະບານ ໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກຈຸດ ສຸມ ແລະ ມາດຕະການ ທີ່ກຳນົດໄວ້ ມີ ຜົນສຳເລັດຫຼາຍດ້ານ ເປັນຕົ້ນ ທົ່ວປະເທດ ສືບຕໍ່ຮັກສາໄດ້ສະຖຽນລະພາບທາງດ້ານ ການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມ ສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ ໂດຍໄດ້ສົມທົບກັບທ້ອງ ຖິ່ນ ສືບຕໍ່ຫັນລົງກໍ່ສ້າງຮາກຖານການ ເມືອງ ຢູ່ບັນດາຮາກ ຖານແລະຈຸດຫຼໍ່ ແຫຼມ; ໄດ້ເອົາໃຈໃສ່ສະກັດກັ້ນ ແລະ ແກ້ ໄຂປະກົດການຫຍໍ້ທໍ້ຕ່າງໆ ຊຶ່ງສາມາດ ມ້າງຄະດີຢາເສບ ຕິດ 299 ເລື່ອງ, ມ້າງ ກຸ່ມແກ໊ງສະແກມເມີ 6 ຄັ້ງ ກັກຕົວຜູ້ຖືກ ຫາ ໄດ້ 51 ຄົນ ລວມມີ 7 ສັນຊາດ; ເກັບກູ້ອາວຸດເສິກໄດ້ 224 ກະບອກ.

ແກ້ໄຂການລັກລອບຂຸດຄົ້ນແຮ່ ທາດ ແຕ່ເດືອນຕຸລາ ຫາຕົ້ນເດືອນພະຈິກ ຢູ່ນະຄອນຫຼວງວຽງຈັນ, ແຂວງວຽງ ຈັນ, ແຂວງຊຽງຂວາງ, ແຂວງບໍລິຄຳໄຊ ແລະ ແຂວງໄຊສົມບຸນ ສາມາດຍຶດລົດຈັກໄດ້ 39 ຄັນ, ລົດກະບະ 3 ຄັນ ແລະ ເຄື່ອງມື-ອຸປະກອນ ທີ່ນຳໃຊ້ເຂົ້າໃນການ ລັກລອບຈຳນວນໜຶ່ງ; ຄະນະສະເພາະກິດ 1885/ກງ ໄດ້ທ້ອນໂຮມຊັບສິນ ທີ່ ຍຶດໄດ້ ແຕ່ເດືອນເມສາ ຫາເດືອນພະຈິກ 2026 ຢູ່ 8 ແຂວງ, ລວມມີພາຫະນະ 103 ຄັນ, ຊຶ່ງຊັບສິນທີ່ສະ ສາງສຳເລັດ ແລ້ວ ມີພາຫະນະ 33 ຄັນ ມູນຄ່າ 10,8 ຕື້ກີບ, ສ່ວນຊັບສິນ ທີ່ຍັງຢູ່ໃນຂັ້ນຕອນ ກະກຽມສະສາງອອກ ຄາດຄະເນລາຍຮັບ ເພີ່ມ 30 ຕື້ກີບ; ສຳເລັດການປັບປຸງ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ X; ສຳເລັດການກະກຽມລາຍງານ ທາງດ້ານເນື້ອໃນ ໃນຫົວຂໍ້ທີ່ຕິດພັນກັບ ຄວາມຮັບຜິດຊອບຂອງລັດຖະບານ ທີ່ ລາຍງານຕໍ່ກອງປະຊຸມກົມການເມືອງ ຮ່ວມກັບ ຄະນະເລຂາທິການສູນກາງພັກ ຈຳນວນ 3 ຫົວຂໍ້; ຮອດວັນທີ 17 ພະຈິກ 2026 ສາມາດເກັບລາຍຮັບເຂົ້າ ງົບປະມານ ໄດ້ 92% ຂອງແຜນການປີ (ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19% ເປັນເງິນປະມານ 12 ພັນ ກວ່າຕື້ກີບ), ປະຕິບັດແຜນລາຍ ຈ່າຍງົບ ປະມານໄດ້ 68% ຂອງແຜນການປີ, ສາມາດຄວບ ຄຸມອັດຕາເງິນເຟີ້ ສະເລ່ຍ ຢູ່ໃນລະດັບ 7,7%; ການລະດົມແຫລ່ງ ທຶນ ເພື່ອມາດຸນດ່ຽງງົບປະມານຈາກ ພາຍໃນ ແລະ ຕ່າງປະເທດ ໄດ້ 69% ຂອງແຜນການປີ; ຮອດວັນທີ 13 ພະຈິກ 2026 ສາມາດສະສົມຄັງສຳຮອງເງິນຕາ ຕ່າງປະ ເທດ ກຸ້ມການນຳເຂົ້າ 5,66 ເດືອນ; ສາມາດອອກໃບຕາດິນໄດ້ 167.000 ກວ່າຕອນ ເທົ່າກັບ 120% ຂອງແຜ ການປີ.

ໄດ້ເອົາໃຈໃສ່ສົ່ງເສີມການຜະລິດ ເພື່ອຫົດແທນການນຳເຂົ້າ ແລະ ເປັນ ສິນຄ້າ, ທັງຄຸ້ມຄອງລາຄາສິນຄ້າ ແລະ ຄ່າ ບໍລິການ; ລັດຖະບານ ໄດ້ຮັບກົນຈັກ ແລະ ອຸປະກອນສ້ອມແປງເສັ້ນທາງ ຈາກ ລັດຖະບານຍີ່ປຸ່ນ ມູນຄ່າເກືອບ 1 ລ້ານ ເຢັນ; ໄດ້ຈັດຕັ້ງປະຕິບັດມະຕິ 165/ ສພຊ ແລະ ມະຕິ 10/ລບ ວ່າດ້ວຍ ນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງເສັ້ນທາງໃນໄລຍະໃໝ່ ຫລື ໂຄງການ OPBRC ແລະ PRTC ຊຶ່ງໄດ້ ເລີ່ມຕົ້ນຈັດຕັ້ງປະຕິບັດເກັບເງິນຜ່ານທາງ ເລກ 9 ເປັນໂຄງການຕົວແບບ ໂດຍເລີ່ມ ແຕ່ວັນທີ 16 ພະຈິກ 2026 ເຫັນວ່າ ສາມາດເກັບເງິນຄ່າຜ່ານທາງດັ່ງກ່າວ ບໍ່ຫຼຸດ 700 ລ້ານກີບຕໍ່ມື້; ໄດ້ສືບຕໍ່ສຸມໃສ່ ບູລະນະສ້ອມແປງເສັ້ນທາງຫລວງ ແຫ່ງຊາດ, ຟື້ນຟູບັນດາເສັ້ນທາງ ທີ່ໄດ້ຮັບ ຜົນກະທົບຈາກໄພພິບັດ ສາມາດທຽວໄປ-ມາໄດ້ສະດວກຫລາຍຂຶ້ນ; ສຳເລັດການ ກໍ່ສ້າງ, ມອບ-ຮັບສະ ໜາມກິລາເຈົ້າອານຸ ວົງ; ສຳເລັດກອງປະຊຸມຄະນະຄຸ້ມ ຄອງ ອິນເຕີເນັດແຫ່ງຊາດ ແລະ ກອງປະຊຸມ ລະດັບສູງ ວ່າດ້ວຍການຫັນເປັນດິຈິຕອນ ຂອງ ສປປ ລາວ ປະຈຳປີ 2026; ສຳເລັດການຍົກລະດັບ ມະຫາວິທະຍາໄລ ສຸຂະ ພາບ ເປັນມະຫາວິທະຍາໄລ ວິທະຍາສາດສຸຂະພາບແຫ່ງ ຊາດ ແລະ ເປີດສົກຮຽນໃໝ່ 2026-2027, ທັງໄດ້ ເອົາໃຈໃສ່ປັບປຸງການບໍລິການດ້ານ ສາທາລະນະສຸກ ແລະ ປ້ອງ ກັນການແຜ່ ລະບາດຂອງພະຍາດຕາມລະດູການ ຢ່າງ ໃກ້ ຊິດ; ໄດ້ສຸມໃສ່ປັບປຸງສະພາບ ແວດລ້ອມທ່ອງທ່ຽວ ແລະ ສິ່ງອຳນວຍ ຄວາມສະດວກຕ່າງໆ; ໄດ້ເອົາໃຈໃສ່ ຕິດຕາມ ສະພາບການພາກພື້ນ ແລະ ສາກົນຢ່າງໃກ້ຊິດ, ການນຳຂັ້ນສູງຂອງພັກ-ລັດ ໄດ້ເຄື່ອນໄຫວຢ້ຽມຢາມບັນດາ ປະເທດເພື່ອນມິດ ແລະ ເຂົ້າຮ່ວມບັນດາ ກອງປະຊຸມສາກົນ ເປັນຕົ້ນ ກອງປະຊຸມ ສຸດຍອດອົງການຝຣັ່ງໂກໂຟນີສາກົນ ຄັ້ງທີ 20 ທີ່ລາຊະອານາຈັກກຳປູເຈຍ, ກອງ ປະຊຸມສຸດຍອດອາຊຽນ ຄັ້ງທີ 49 ແລະ ກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ທີ່ຟີລິບ ປິນ, ພ້ອມກັນນັ້ນ ກໍໄດ້ຕ້ອນຮັບຄະນະ ຜູ້ແທນຂັ້ນສູງຂອງຕ່າງປະເທດ ທີ່ມາ ຢ້ຽມຢາມ ສປປ ລາວ ມີຜົນ ສຳ ເລັດເປັນ ຢ່າງດີ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍ ເຫັນວ່າ ຍັງມີວຽກງານຈຳນວນໜຶ່ງ ທີ່ຈະ ຕ້ອງສືບຕໍ່ເອົາໃຈໃສ່ຊີ້ນຳ, ຕິດຕາມ, ກວດ ກາ, ກຳນົດມາດຕະການແກ້ໄຂໃຫ້ທັນ ແລະ ມີປະສິດທິຜົນຫລາຍກວ່າເກົ່າ ເປັນ ຕົ້ນ ບັນຫາປະກົດການຫຍໍ້ທໍ້ຂອງສັງຄົມ, ຂົງເຂດບໍ່ແຮ່, ຂົງເຂດການຄ້າ, ຂົງເຂດ ການຜະລິດ ແລະ ຂົງເຂດອື່ນໆ.

ວາລະທີ 2 ກອງປະຊຸມເຫັນດີດ້ານ ຫຼັກການ ຮັບຮອງເອົາຮ່າງແຜນແມ່ບົດ ແລະ ແຜນດຳເນີນງານ ການສົ່ງເສີມການ ນຳໃຊ້ລົດໄຟຟ້າ ແລະ ພະລັງງານໃໝ່ (XEV) 2026- 2035 ໂດຍໄດ້ຊີ້ນຳ ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບຂະແໜງການ ແລະ ພາກສ່ວນ ກ່ຽວຂ້ອງ ປັບ ປຸງຕື່ມ ຕາມຄຳເຫັນຂອງ ສະມາຊິກລັດຖະບານ ເປັນຕົ້ນ ກຳນົດຂໍ້ ຫ້າມນຳເຂົ້າແບັດເຕີລີລົດ ທີ່ເສື່ອມ ແລະ ບໍ່ໄດ້ຄຸນນະພາບ, ທັງກຳນົດແຜນຈັດການ ວັດຖຸອຸປະກອນ, ອາ ໄຫຼ່ ແລະອື່ນໆ ພາຍຫຼັງທີ່ລົດໄຟຟ້າໝົດອາຍຸການນຳໃຊ້ ແລະ ກາຍເປັນສິ່ງເສດເຫລືອໃນຕໍ່ໜ້າ;

ຕໍ່ໜ້າ 5

ຜັນກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນພະຈິກ 2... (ຕໍ່ຈາກໜ້າ 4)

ໃຫ້ຂະແໜງການກ່ຽວຂ້ອງ ນຳເອົາ ຍຸດທະສາດນີ້ ໄປຈັດຕັ້ງຜັນຂະຫຍາຍເຂົ້າ ໃນວຽກງານຂອງຂະແໜງການຕົນ ໃຫ້ ເປັນອັນລະ ອຽດ ແລະ ສາມາດຈັດຕັ້ງ ປະຕິບັດໄດ້; ໃຫ້ປັບປຸງຂໍ້ຕົກລົງ ແຕ່ງຕັ້ງ ຄະນະຮັບຜິດຊອບວຽກງານນີ້ຄືນໃໝ່ ໃຫ້ ສຳເລັດ ແລະ ສາມາດປະກາດນຳໃຊ້ໂດຍ ໄວ.

ວາລະທີ 3 ກອງປະຊຸມ ເຫັນດີ ດ້ານຫຼັກການ ຮັບຮອງເອົາຮ່າງດຳລັດ ວ່າ ດ້ວຍມາດຕະການຊໍ່ຄາວ, ການຍຶດ, ອາ ຍັດ ແລະ ຮິບທຶນ ຫຼື ຊັບສິນ ທີ່ພົວພັນ ກັບການກະທຳ ຜິດ ເປັນຕົ້ນ ການຟອກ ເງິນ,ການສະໜອງທຶນໃຫ້ແກ່ການ ກໍ່ການ ຮ້າຍ ໂດຍໄດ້ຊີ້ນຳທະນາຄານແຫ່ງ ສປປ ລາວ ສົມ ທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ປັບປຸງຕື່ມຕາມຄຳ ເຫັນຂອງສະມາຊິກລັດຖະບານ ເປັນຕົ້ນ ແຜນ ການຊີ້ແຈງບັນຊີສີເທົາ, ການນຳໃຊ້ ຄຳສັບ, ຂໍ້ມູນ ຫຼື ຫຼັກ ຖານ ທີ່ພາໃຫ້ ສົງໄສ ຫຼື ພຶດຕິກຳທີ່ເປັນການກະທຳຜິດ ຕົ້ນ ຫລື ເຫດການຮິບດ່ວນ ທີ່ອາດ ກະທົບໃສ່ທຶນ ຫຼື ຊັບສິນ ໃຫ້ຄົບຖ້ວນ, ຮັດກຸມ, ຊັດເຈນ ເພື່ອເປັນບ່ອນອີງໃນ ການຄຸ້ມຄອງ, ການຕິດຕາມກວດກາ ແລະ ເຄື່ອນໄຫວອຽກ ງານດັ່ງກ່າວ ໃຫ້ມີ ຄວາມເຂັ້ມແຂງ, ມີປະສິດທິພາບ, ສ້າງ ຄວາມເຊື່ອໝັ້ນໃຫ້ແກ່ສາກົນ.

ວາລະທີ 4 ກອງປະຊຸມເຫັນດີດ້ານ ຫຼັກການ ຮັບຮອງເອົາຮ່າງດຳລັດ ວ່າດ້ວຍ ການຄຸ້ມຄອງຂໍ້ມູນດິຈິຕອນພາກລັດ ໂດຍ ໄດ້ຊີ້ນຳທະຊອງເຕັກໂນໂລຊີ ແລະ ການສື ສານ ສົມທົບກັບພາກສ່ວນກ່ຽວຂ້ອງ ປັບປຸງຕື່ມ ຕາມຄຳເຫັນຂອງສະມາຊິກ ລັດຖະບານ ໂດຍສະເພາະ ບັນດາຂໍ້ມູນທີ່ ຫ້າມເປີດເຜີຍ; ການປົກປ້ອງຂໍ້ມູນ ພາຍໃນ; ບັນຫາທີ່ຕິດພັນກັບຄວາມໝັ້ນ ຄົງຂອງຊາດ ພາຍຫຼັງປັບປຸງແລ້ວ ໃຫ້ນຳ ສະເໜີຜ່ານກອງປະຊຸມນາຍົກ-ຮອງນາຍົກ ລັດຖະມົນຕີ ຕື່ມອີກ.

ສຳລັບແຜນວຽກຈຸດສຸມ ປະຈຳ ເດືອນຫັນອາ 2026 ກອງປະຊຸມ ໄດ້ຊີ້ນຳ ຂະແໜງການ, ທ້ອງຖິ່ນ ແລະ ພາກ ສ່ວນ ກ່ຽວຂ້ອງ ເອົາໃຈໃສ່ບັນດາວຽກງານ ສຳຄັນ ໂດຍສະເພາະ

ໃຫ້ສືບຕໍ່ເອົາໃຈໃສ່ຮັກສາຄວາມ ສະຫງົບ ແລະ ແກ້ໄຂປະກົດການຫຍໍ້ທໍ້ ຕ່າງໆໃນສັງຄົມ ເປັນຕົ້ນ ບັນຫາອາຊະຍາ ກຳທາງໄຊເບີ, ບັນຫາການຟອກເງິນ, ບັນຫາຢາເສບ ຕິດ, ບັນຫາການຄ້າຂາຍ ເຖື່ອນ, ບັນຫາລັກຂຸດຄົ້ນຕັດໄມ້, ບັນຫາ ຂໍ້ລັກງັດແງະປຸ້ນຈີ້ຊິງຊັບ, ບັນຫາອຸດ ເສີກທີ່ນຳໃຊ້ບໍ່ຖືກຕ້ອງ; ກະກຽມເນື້ອໃນ ທີ່ຈະນຳເຂົ້າລາຍງານຕໍ່ ກອງປະຊຸມ ຄົບ ຄະນະບໍລິຫານງານສູນກາງພັກ ຄັ້ງທີ 4 ສະໄໝທີ XII ແລະ ກອງປະຊຸມ ລັດຖະບານ ເປີດກວ້າງ ຄັ້ງທີ II ປະຈຳປີ 2026 ໂດຍສະເພາະ ບັນດາກະຊວງ-ອົງ ການທຽບເທົ່າ ໃຫ້ສະຫລຸບຕີລາຄາ ວຽກງານ ປະຈຳປີ 2026 ແລະ ທິດທາງ ແຜນການ ປີ 2027; ສະຫຼຸບຕີລາຄາ ສະພາບການປະຕິບັດເງິນກອງທຶນທາງ ປີ 2026 ທິດທາງແຜນການ ປີ 2027; ສະຫລຸບຜົນການຈັດຕັ້ງປະຕິບັດ ມະຕິ 04/ກມສພ, ລົງວັນທີ 11 ເມສາ 2024 (ກ່ຽວກັບ ສອຈ), ມະຕິ 04/ລບ, ລົງ ວັນທີ 23 ມີນາ 2026 (ກ່ຽວ ກັບການ ຫັນການເກັບລາຍຮັບເປັນທັນສະໄໝ) ແລະ ມະ ຕິ 05/ລບ, ລົງວັນທີ 30 ມີນາ 2026 (ກ່ຽວກັບການປັບ ປຸງ ແລະ ກໍ່ສ້າງເສັ້ນທາງ).

ສືບຕໍ່ເກັບລາຍຮັບເຂົ້າງົບປະ ມານ ໂດຍສູ້ຊົນເກັບລາຍຮັບໃຫ້ໄດ້ເກີນແຜນ ໂດຍສຸມໃສ່ແຂວງໃດທີ່ມີຄວາມສ່ຽງຈະບໍ່ ບັນລຸຕາມແຜນ, ເກັບລາຍຮັບຈາກແຫລ່ງ ທີ່ມີໃຫ້ຄົບຖ້ວນ, ກວດກາການປະຕິບັດ ພັນທະຂອງບັນດາໂຄງການລົງທຶນຕ່າງໆ, ປັບປຸງຫັນສ່ວນລະບົບເກັບລາຍຮັບແບບ ທັນສະໄໝ, ເລັ່ງທວງໜີ້ຄ້າງຊຳ ລະທຸກ ປະເພດ, ປະ ມູນຊັບສິນ ທີ່ຍຶດໄດ້ຈາກ ຄະດີຕ່າງໆ, ເກັບຄ່າທຳນຽມ ແລະ ຄ່າບໍລິ ການຕ່າງໆຢູ່ດ່ານ,ກະກຽມການກວດກາ ແລະ ດຳເນີນການປິດ 0 ໂມງ ໃຫ້ໄດ້ຮັບ ຜົນດີ, ສ້າງແຜນການແກ້ໄຂໜີ້ສິນ ທັງໜີ້ ພາຍໃນ ແລະ ຕ່າງປະເທດ; ຮັກສາສະ ຖຽນລະພາບເງິນຕາ ແລະ ລາຄາສິນຄ້າ ເປັນຕົ້ນ ການດຳເນີນນະໂຍບາຍເງິນຕາ ແບບປະສົມປະສານ, ການຄຸ້ມຄອງອັດຕາ ແລກປ່ຽນ ຕາມກົນໄກຕະຫລາດທີ່ລັດ ຄຸ້ມ ຄອງ, ການຄຸ້ມຄອງລາຄາຕໍ່ໝວດ ສິນຄ້າ ແລະ ຄ່າບໍລິການພື້ນ ຖານ.

ຮິບຮ້ອນປັບປຸງ ຄຳສັ່ງ ວ່າດ້ວຍ ການເພີ່ມທະວີການຄຸ້ມຄອງແຮ່ທາດ ໃນ ໄລຍະໃໝ່ ເພື່ອສະເໜີນາຍົກລັດຖະ ມົນຕີ ລົງລາຍເຊັນ, ຮິບຮ້ອນປັບປຸງແຜນ ແມ່ບົດ ແລະ ແຜນດຳເນີນງານ ການ ສົ່ງເສີມການນຳໃຊ້ລົດໄຟຟ້າ ແລະ ພະລັງງານທາງເລືອກໃໝ່ ທີ່ຜ່ານກອງ ປະຊຸມຄັ້ງນີ້ ໃຫ້ສຳເລັດ ແລະ ລົງລາຍເຊັນ ປະກາດໃຊ້ໄວ,ສືບຕໍ່ຕິດຕາມກວດກາ ໂຄງການບໍ່ແຮ່ທີ່ໄດ້ຮັບອະນຸມັດຜ່ານມາ ຢ່າງເຄັ່ງຄັດ ພ້ອມທັງດຳເນີນການປະມູນ ແຮ່ທາດ ທີ່ຍຶດໄດ້ຈາກການລັກລອບ ຂຸດຄົ້ນ ຫຼື ຂຸດຄົ້ນບໍ່ຖືກຕ້ອງ, ສືບຕໍ່ກວດ ກາບັນດາໂຄງການແຮ່ທາດ ໃນ ຂອບເຂດທົ່ວປະເທດ (ທັງໂຄງການ ສຳຫລວດ, ໂຄງການຂຸດຄົ້ນ ແລະ ປຸງ ແຕ່ງ); ສຸມໃສ່ກໍ່ສ້າງ ແລະ ຍົກລະດັບ ເສັ້ນທາງຫລວງແຫ່ງຊາດ ທີ່ມີທຶນແລ້ວໃຫ້ ສຳເລັດໄວ ໂດຍສະເພາະ ເສັ້ນທາງ 13 ເໜືອ ແລະ 13 ໃຕ້, ເສັ້ນທາງເລກທີ 8, ເລກທີ 12, ເສັ້ນທາງ 2E ແລະ ອື່ນໆ, ສືບຕໍ່ຊຸກຍູ້ບັນດາໂຄງການທີ່ເປັນບຸລິມະ ສິດ ເປັນຕົ້ນ ໂຄງການທາງດ່ວນ ລາວ-ຈີນ, ໂຄງການທາງລົດ ໄຟ ລາວ-ຫວຽດນາມ, ໂຄງການທາງດ່ວນ ວຽງຈັນ-ຮ່າໂນ້ຍ ໄລຍະທີ 2 ແຕ່ເມືອງບໍລິຄັນ ຫາ ຊາຍແດນດ່ານນ້ຳອອນ, ເລັ່ງຈັດລຽງລຶມະ ສິດຄວາມຈຳເປັນຂອງແຕ່ລະເສັ້ນ ທາງ ພ້ອມທັງຄົ້ນຄວ້າແຫລ່ງທຶນ ແລະ ຮູບແບບການລົງ ທຶນ (ແບບ BOT ຫລື OPBRC ຫລື ງົບປະມານຂອງລັດ) ແລ້ວ ລາຍງານຕໍ່ກອງປະຊຸມລັດຖະບານ ເປີດ ກວ້າງ ຄັ້ງທີ II ທີ່ຈະຈັດຂຶ້ນໃນເດືອນ ຫັນອາ 2026.

ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສືບຕໍ່ປະ ສານສົມທົບກັບ ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ບັນ ດາແຂວງ ສຸມໃສ່ຈັດຕັ້ງຜັນຂະຫຍາຍ ວາລະແຫ່ງຊາດ ວ່າດ້ວຍການພັດທະນາ ຊົນນະບົດ ແລະ ແກ້ໄຂຄວາມທຸກ ຍາກ ໃຫ້ມີຄວາມຄືບໜ້າເປັນກ້າວໆ, ສຸມໃສ່ ເກັບກ່ຽວເຂົ້ານາປີ ແລະ ກະກຽມຄວາມ ພ້ອມໃຫ້ແກ່ການຜະລິດລະດູແລ້ງ, ເອົາໃຈໃສ່ປ້ອງກັນການບຸກລຸກຈັບຈອງ ທີ່ດິນປ່າໄມ້, ເລັ່ງອອກໃບຕາດິນໃຫ້ບັນລຸ ຕາມແຜນ, ຕິດຕາມເຝົ້າລະ ວັງ, ສະກັດ ກັ້ນ ແລະ ແກ້ໄຂ ການລະບາດຂອງ ພະຍາດສັດ ທີ່ເກີດຂຶ້ນຕາມລະດູການ, ສຸມໃສ່ຊຸກຍູ້ ແລະ ສົ່ງເສີມການຜະລິດ ກະສິກຳເປັນສິນຄ້າ ເພື່ອທົດແທນການນຳ ເຂົ້າ ແລະ ສົ່ງອອກໃຫ້ບັນລຸຕາມ ແຜນການ, ເອົາໃຈໃສ່ໃນການລົງຕິດຕາມ ກວດກາ ແລະ ແກ້ໄຂຜົນກະທົບຕໍ່ສິ່ງ ແວດ ລ້ອມ ຈາກໂຄງການລົງທຶນຕ່າງໆ ໂດຍສະເພາະ ໂຄງການບໍ່ແຮ່.

ສຸມໃສ່ການພັດທະນາສີມືແຮງງານ ໃຫ້ມີຄຸນນະພາບສູງຂຶ້ນ ເພື່ອສະໜອງ ແຮງງານໃຫ້ພຽງພໍກັບຄວາມຕ້ອງ ການ ຂອງບັນດາໂຄງການ, ສຸມໃສ່ຄຸ້ມຄອງ ແຮງງານຕ່າງປະເທດ ທີ່ມາອອກແຮງງານຢູ່ ລາວ ໃຫ້ເຄື່ອນໄຫວ ແລະ ປະຕິບັດ ພັນທະຕາມກົດໝາຍ, ເອົາໃຈໃສ່ປະຕິບັດ ນະໂຍ ບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມ ຄວາມດີຕໍ່ປະເທດ ຊາດ; ສືບຕໍ່ເອົາໃຈໃສ່ ປະຕິບັດມາດຕະການຕ່າງໆ ເພື່ອໃຫ້ອັດຕາ ການປະລະການຮຽນຫລຸດລົງ, ສືບຕໍ່ສຸມ ໃສ່ປັບປຸງຄຸນນະພາບການຮຽນ-ການສອນ ໃຫ້ສູງຂຶ້ນ ແລະ ຊອກຫາສາເຫດຂອງການ ປະລະການຮຽນ ເພື່ອມີມາດຕະການ ແກ້ໄຂໂດຍໄວ; ເພີ່ມທະວີການເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່, ພະຍາດ ຕາມລະດູການ, ສົ່ງ ເສີມການສັກວັກຊີນ, ສືບຕໍ່ຕິດຕາມກວດກາ ບັນດາໂຮງ ໝໍ ເອກະຊົນ ແລະ ສູນຄວາມງາມ ໃຫ້ ເຄື່ອນໄຫວຖືກ ຕ້ອງ ແລະ ໄດ້ ມາດຕະຖານ ເອົາໃຈໃສ່ຕໍ່ວຽກງານ ອາຫານ ແລະ ຢາ ເພື່ອຮັບປະກັນຄວາມ ປອດໄພຂອງຜູ້ນຳໃຊ້.

ສົ່ງເສີມວັດທະນະທຳຮີດຄອງອັນດີ ງາມຂອງຊາດ ໃນການຈັດງານບຸນປະເພນີ ຕ່າງໆ ໃຫ້ມີຄວາມຟົດຟື້ນ, ສຸມໃສ່ປັບປຸງ ສະຖານທີ່ທ່ອງທ່ຽວ ໃຫ້ມີຄວາມ ສະດວກ, ປອດໄພ, ປະທັບໃຈ ແລະ ໄດ້ ມາດຕະຖານ ພ້ອມທັງ ສົມທົບກັບ ພາກສ່ວນກ່ຽວຂ້ອງ ກວດກາຄືນບັນດາ ສະຖານທີ່ບັນ ເທີງ, ຮ້ານອາຫານ ທີ່ຍັງລະ ເມີດມາດຕະການຂອງລັດຖະ ບານທີ່ ກຳນົດ ເຊັ່ນ: ໃຊ້ສຽງດັງ, ເປີດກາຍໂມງ, ສຸມໃສ່ພັດທະນາແຫລ່ງທ່ອງທ່ຽວໃຫ້ມີ ຄວາມຫຼາກຫຼາຍ; ສຸມໃສ່ການປະຕິບັດຄຳ ຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄດ້ເພີ່ມຂຶ້ນ, ສືບຕໍ່ຕິດຕາມ, ກວດກາ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານຂອງ ບັນດາຂະແໜງ ແລະ ໜ່ວຍງານປະຕິບັດ ຄຳຕັດສິນຂອງສານທົ່ວປະເທດ; ແຈ້ງ ເຕືອນໃຫ້ປະຊາຊົນ ແລະ ພາກສ່ວນຕ່າງໆ ຊາບກ່ຽວກັບຮູບການຕ່າງໆທີ່ກຸ່ມຄົນບໍ່ດີ ຕົວະຍົວະຫລອກລວງທາງໄຊເບີ ເພື່ອເພີ່ມ ຄວາມລະມັດລະວັງ ຕໍ່ໄພຄຸກຄາມທາງໄຊ ເບີ, ເອົາໃຈໃສ່ສະກັດກັ້ນ, ປ້ອງກັນ ແລະ ແກ້ໄຂ ບັນຫາຂ່າວລວງ, ຂ່າວປອມ ທີ່ບິດ ເບືອນຄວາມເປັນຈິງ ໂດຍນຳໃຊ້ຫລາຍ ວິທີ, ຫຼາຍຮູບການ ເພື່ອຕ້ານ ປະກົດການດັ່ງກ່າວ; ສືບຕໍ່ຕິດຕາມ ສະພາບພື້ນເດັ່ນໃນພາກພື້ນ ແລະ ສາກົນ ຢ່າງໃກ້ ຊິດ ພ້ອມທັງປະເມີນສະພາບ ເກີດຂຶ້ນ ຈະກະທົບຕໍ່ປະ ເທດເຮົາຄືແນວ ໃດ,ກະກຽມການເດີນທາງໄປຕ່າງປະເທດ ຂອງການນຳຂັ້ນສູງ ທີ່ຈະເດີນທາງໄປ

ຕໍ່ໜ້າ 6

ຜົນກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນພະຈິກ 2... (ຕໍ່ຈາກໜ້າ 5)

ຢ້ຽມຢາມທາງການ ແລະ ເຂົ້າຮ່ວມປະຊຸມ ສຸດຍອດແອັກແມັກ ແລະ CLMV ຢູ່ ສສ ຫວຽດນາມ ແລະ ກະກຽມຕ້ອນຮັບແຂກຕ່າງປະເທດ ໃຫ້ດີ.

ນອກຈາກນີ້, ທ່ານ ນາຍົກ ລັດຖະມົນຕີ ຍັງໄດ້ຮຽກ ຮ້ອງມາຍັງບັນດາ ສະມາຊິກລັດຖະບານ ແລະ ການນຳບັນດາທ້ອງຖິ່ນ ນຳເອົາແຜນວຽກຈຸດສຸມ ປະຈຳເດືອນທັນ ວາ 2026 ທີ່ກອງ ປະຊຸມໄດ້ເອກະພາບກັນ ໄປປັບປຸງເຂົ້າໃນ ແຜນວຽກຂອງຂະແໜງການ ແລະ ທ້ອງຖິ່ນຕົນໃຫ້ລະ ອຽດ, ມີການແບ່ງ ຄວາມຮັບຜິດຊອບ ໃຫ້ສອດຄ່ອງກັບ ສະພາບຄວາມເປັນຈິງ ຂອງການຈັດຕັ້ງ ແຕ່ລະຂັ້ນ ແລະ ມີຄາດໝາຍເວລາສຳເລັດ ທີ່ຊັດເຈນ.

ຂ່າວ: ກົມປະຊາສຳພັນ ຫສນຍ

ข่าวพายใน · 09:43 ໂມງ · ອ່ານ 8 ຄັ້ງ

ຄະນະກວດກາພັກ-ລັດ ເມືອງຫຼາ ແຂວງອຸດົມໄຊ ສະຫຼຸບວຽກງານກວດກາ 5 ປີ ເຜີຍຜົນງານພົ້ນເດັ່ນການກວດກາໂຄງການລັດ, ບໍ່ແຮ່ ແລະ ການລັກລອບເຄື່ອນຍ້າຍໄມ້!



ວັນທີ 18 ພະຈິກ 2026 ທີ່ຜ່ານມາ, ຄະນະກວດກາພັກ-ລັດ ເມືອງຫຼາ ແຂວງອຸດົມໄຊ ໄດ້ຈັດກອງປະຊຸມສະຫຼຸບ ຕີລາຄາວຽກງານກວດກາທົ່ວເມືອງ 5 ປີ ໂດຍການເປັນປະທານຂອງ ສະຫາຍ ສອນ ສຸວັນ ປັນຍາວົງ ກຳມະການພັກແຂວງ, ເລຂາພັກເມືອງ ພ້ອມດ້ວຍພາກສ່ວນ ກ່ຽວຂ້ອງເຂົ້າຮ່ວມ.

ໃນໂອກາດກ່າວເປີດກອງປະຊຸມ, ສະຫາຍ ສອນ ສຸວັນ ປັນຍາວົງ ໄດ້ ເນັ້ນໜັກເຖິງຄວາມສຳຄັນຂອງວຽກງານ ກວດກາ ເຊິ່ງເປັນກົນໄກຫຼັກໃນການ ຮັບປະກັນຄວາມຖືກຕ້ອງ, ຄວາມໂປ່ງໃສ ແລະ ລະບຽບວິໄນພາຍໃນອົງການພັກ-ລັດ ພ້ອມທັງຮຽກຮ້ອງໃຫ້ຍຶດໝັ້ນຄຳ ຂວັນ: “ເພີ່ມທະວີວຽກງານຕິດຕາມ, ກວດກາ ໃຫ້ເຂັ້ມງວດຮອບດ້ານ, ຕ້ານ ແລະ ແກ້ໄຂການສໍ້ລາດບັງຫຼວງຢ່າງເດັດ ຂາດ, ໂປ່ງໃສ ແລະ ທັນສະໄໝ ເພື່ອ ພັດທະນາປະເທດຊາດໃຫ້ມີຄວາມຍືນ ຍົງ”.

ຜົນງານທີ່ພົ້ນເດັ່ນໃນໄລຍະ 5 ປີ ຜ່ານມາ

ຈາກນັ້ນ, ສະຫາຍ ຈື່ວ່າ ຊາວເຊັ່ງ ກຳມະການປະຈຳພັກເມືອງ, ປະທານ ຄະນະກວດກາພັກ, ປະທານອົງການກວດ ກາລັດ ແລະ ຫົວໜ້າອົງການຕ້ານການ ສໍ້ລາດບັງຫຼວງເມືອງ ໄດ້ຂຶ້ນຜ່ານຮ່າງບົດ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ວຽກງານໄລຍະ 5 ປີ (2021-2025) ແລະ ທິດທາງແຜນການ 5 ປີຕໍ່ໜ້າ (2026-2030) ເຊິ່ງໄດ້ຍົກໃຫ້ເຫັນຜົນ ງານສຳຄັນຫຼາຍດ້ານ ດັ່ງນີ້:

ການຕິດຕາມໂຄງການລົງທຶນຂອງ ລັດ: ໄດ້ຕິດຕາມກວດກາໂຄງການກໍ່ສ້າງ ແລະ ປັບປຸງພຸມມີທັດວັດພະເຈົ້າສິງຄຳ ຕິດພັນກັບສອນສາທາລະນະ ມູນຄ່າລວມ 14,238,571,000 ກີບ (ໃນນັ້ນ ໄລຍະທີ 1 ມີມູນຄ່າ 4,580,000,000 ກີບ).

ການກວດກາໂຄງການຂຸດຄົ້ນແຮ່ ທາດ: ໄດ້ຕິດຕາມ 4 ບໍລິສັດ ຄື: ບໍລິສັດ CNP, ບໍລິສັດຕຸ່ນຮ່ອງ, ບໍລິສັດລາວນ້ຳຄຳ ແລະ ບໍລິສັດຫົງຊິນແຮ່ທາດຈຳກັດ. ຜ່ານ ການກວດກາພົບວ່າ ການຂຸດຄົ້ນແຮ່ທາດ ຂອງບໍລິສັດ CNP ໄດ້ສົ່ງຜົນກະທົບດ້ານ ສິ່ງແວດລ້ອມ ແລະ ສັງຄົມ ຕໍ່ປະຊາຊົນ 61 ຄອບຄົວ ຢູ່ກຸ່ມຕາດມ່ວນ ລວມມູນ ຄ່າເສຍຫາຍທັງໝົດ 59,414,000 ກີບ.

ການກວດກາ ແລະ ປາບປາມການ ເຄື່ອນຍ້າຍໄມ້ຜິດກົດໝາຍ: ກວດພົບ ທັງໝົດ 26 ກໍລະນີ, ມີຜູ້ກ່ຽວຂ້ອງ 15 ຄົນ (ໃນນັ້ນເປັນພະນັກງານລັດຖະກອນ 2 ຄົນ ແລະ ເຈົ້າໜ້າທີ່ ປກຊ-ປກສ 2 ຄົນ), ສາມາດຍຶດໄມ້ໄດ້ 46.486 ແມັດ ກ້ອນ, ຈັກສະຕີນ 1 ເຄື່ອງ, ແກ້ໄຂ ສຳເລັດແລ້ວ 23 ກໍລະນີ ແລະ ປັບໃໝ ເປັນເງິນ 130,119,000 ກີບ ເຊິ່ງໄດ້ ມອບເຂົ້າງົບປະມານແຫ່ງລັດ 100%.

ນອກຈາກນີ້, ກອງປະຊຸມຍັງໄດ້ ເຜີຍແຜ່ເອກະສານສຳຄັນຕ່າງໆ ກ່ຽວກັບ ວຽກງານຕິດຕາມກວດກາ. ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນຊີ້ນຳໃຫ້ ຄະນະກວດກາພັກ-ລັດ ແລະ ພະນັກງານ ຮັບຜິດຊອບ ນຳເອົາຂໍ້ຄິດເຫັນໄປປັບປຸງ ແຜນວຽກໃຫ້ມີຈຸດສຸມ ແລະ ວາງມາດຕະ ການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ເພື່ອເຮັດໃຫ້ວຽກງານກວດກາໃນ 5 ປີຕໍ່ ໜ້າ ມີຄວາມເຂັ້ມແຂງ ແລະ ໂປ່ງໃສຍິ່ງ ຂຶ້ນ.

ຂ່າວໂດຍ: ນາງ ເກດທອງ ປັນຍາ ລັກ (ອົງການກວດກາລັດ ເມືອງຫຼາ ແຂວງອຸດົມໄຊ)

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 09:34 ໂມງ · ອ່ານ 8 ຄັ້ງ

ເລຂາພັກແຂວງຄຳມ່ວນ ຕ້ອນຮັບຄະນະຜູ້ແທນເຢຍລະມັນ ເພື່ອຫາລືຜົນສຳເລັດໂຄງການພັດທະນາຊົນນະບົດ



ແຫລ່ງຂ່າວຈາກ ແຂວງຄຳມ່ວນ ໃຫ້ຮູ້ວ່າ: ທ່ານ ໄຊຊະນະ ໂຄດພູທອນ ເລຂາຄະນະບໍລິຫານພັກແຂວງ, ປະທານປະຊາຊົນແຂວງຄຳມ່ວນ ໄດ້ຕ້ອນຮັບຄະນະຜູ້ແທນຈາກກະຊວງຮ່ວມມືເສດຖະກິດ ແລະ ການພັດທະນາ (BMZ), ສະຖານທູດເຢຍລະມັນປະຈຳລາວ, ທະນາຄານເພື່ອການພັດທະນາ (KfW) ແລະ ອົງການ GIZ, ຊຶ່ງນຳໂດຍ ທ່ານນາງ ມິຄາເອວລາ ເຮນນິງ ຮອງຫົວໜ້າພະແນກອາຊີຕາເວັນອອກສຽງໃຕ້ ແລະ ທ່ານ ນາງ ຄາທາລິນາ ວຽນເດັນ ພ້ອມຄະນະ ໃນວັນທີ 23 ພະຈິກ 2026 ທີ່ຫ້ອງວ່າການປົກຄອງແຂວງຄຳມ່ວນ, ເພື່ອປະເມີນຜົນ ແລະ ແລກປ່ຽນຄຳເຫັນກ່ຽວກັບການຮ່ວມມືພັດທະນາໃນແຂວງຄຳມ່ວນ.

ໃນປີ 2022 ແຂວງຄຳມ່ວນ ໄດ້ຮັບທຶນຊ່ວຍເຫລືອຈາກລັດຖະບານ ແລະ ປະຊາຊົນເຢຍລະມັນ ຜ່ານ KfW ເພື່ອກໍ່ສ້າງທາງຊົນນະບົດໃນເມືອງບົວລະພາ ແລະ ເມືອງໄຊບົວທອງ ລວມຄວາມຍາວ 77 ກິໂລແມັດ ພ້ອມຂົວຂະໜາດນ້ອຍ 9 ແຫ່ງ ມູນຄ່າປະມານ 88 ຕື້ກີບ. ນອກນັ້ນ, ຍັງສະໜັບສະໜູນໂຄງການອະນຸລັກຊີວະນາໆພັນແບບປະສົມປະສານ ໃນເຂດປ່າສະຫງວນຫີນໝາມໝໍ່ ແລະ ຊຸນເຊໜອງມ້າ ຊຶ່ງໄດ້ສຳເລັດຕາມເປົ້າໝາຍ ທັງດ້ານການອະນຸລັກຊັບພະຍາກອນປ່າໄມ້ ແລະ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ.

ໃນໂອກາດນີ້ ທ່ານ ໄຊຊະນະ ໂຄດພູທອນ ໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນເຢຍລະມັນ ທີ່ໃຫ້ການຊ່ວຍເຫລືອດ້ານທຶນຮອນ ແລະ ເຕັກນິກ ເພື່ອພັດທະນາໂຄງລ່າງຊົນນະບົດ ແລະ ອະນຸລັກທຳມະຊາດ, ພ້ອມສະເໜີໃຫ້ສືບຕໍ່ຂະຫຍາຍການຮ່ວມມືດ້ານການພັດທະນາ ການຊ່ວຍເຫລືອ ແລະ ການສົ່ງເສີມການທ່ອງທ່ຽວ. ພ້ອມນີ້, ທັງສອງຝ່າຍຍັງໄດ້ປະເມີນຜົນການດຳເນີນໂຄງການ, ແລກປ່ຽນບັນຫາ ແລະ ຂໍ້ສະເໜີແນະ ໂດຍເນັ້ນໜັກການຮັກສາຄວາມປອດໄພການສັນຈອນ ແລະ ການຄຸ້ມຄອງບຳລຸງຮັກສາເສັ້ນທາງໃຫ້ມີຄວາມຍືນຍົງ.

ຂ່າວ: ມະນີວັນ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 09:23 ໂມງ · ອ່ານ 8 ຄັ້ງ

ການນຳພັກ-ລັດ ຮ່ວມໃສ່ບາດໃນບຸນນະມັດສະການພຣະທາດຫຼວງວຽງຈັນ



ພິທີໃສ່ບາດຖະຫວາຍສັງຄະທານ ແລະ ປັດໄຈ ແດ່ພະສົງສາມະເນນໄຫວ້ພະຮັບສິນ, ຟັງທຳມະເທດສະໜາ ແລະ ຢາດນ້ຳ ຕາມຮີດຄອງປະເພນີທີ່ໄດ້ປະຕິບັດສືບທອດກັນມາແຕ່ບູຮານນະການ ໃນງານບຸນນະມັດສະການພະທາດຫຼວງວຽງຈັນປະຈຳປີ 2026 ເຊິ່ງໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 24 ພະຈິກ 2026 ກົງກັບມື້ຂຶ້ນ 15 ຄ່ຳເດືອນ 12 ລາວ ທີ່ເດີ່ນພຣະທາດຫຼວງ ນະຄອນຫຼວງວຽງຈັນ, ໂດຍພະນະທ່ານ ທອງລຸນ ສີສຸລິດ ປະທານປະເທດ, ທ່ານ ສອນໄຊ ສີພັນດອນ ປະທານສະພາແຫ່ງຊາດ, ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ, ມີການນຳພັກ-ລັດ, ນະຄອນຫຼວງວຽງຈັນ ແລະ ມວນຊົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ພິທີໃສ່ບາດໃນງານບຸນນະມັດສະການພຣະທາດຫຼວງ ໄດ້ຈັດຂຶ້ນທຸກໆປີ ຊຶ່ງເປັນການຕັກບາດຖະຫວາຍສັງຄະທານແດ່ພະພິຊຸສົງ-ສາມະເນນ ຕາມຮີດຄອງປະເພນີຂອງຊາວລາວ. ສະເພາະປີນີ້ ເຫັນວ່າມວນຊົນຈາກທຸກທົ່ວສາລະທິດຕ່າງກໍມີຈິດໃຈໃສສັດທາຫຼັ່ງໄຫຼມາຮ່ວມງານບຸນປະເພນີນະມັດສະການພະທາດຫຼວງຢ່າງຫຼວງຫຼາຍ ແລະ ໄດ້ພ້ອມກັນໃສ່ບາດ, ຢາດນ້ຳ, ຮັບພອນ ແລະ ຟັງທຳມະເທດສະໜາ ເພື່ອອຸທິດສ່ວນບຸນກຸສົນໃຫ້ບັນພະບຸລຸດ ແລະ ເຈົ້າກຳນາຍເວນຕາມຄວາມເຊື່ອ ຖືຂອງຊາວພຸດທີ່ເຄີຍສືບທອດກັນມາແຕ່ດຶກດຳບັນພ ເພື່ອເປັນການອະນຸລັກປົກປັກຮັກສາ ແລະເສີມຂະຫຍາຍວັດ ທະນະທຳຮີດຄອງປະເພນີອັນດີງາມຂອງຊາດ ແລະ ເພື່ອເປັນສິຣິມຸງຄຸນ ໃຫ້ແກ່ຊີວິດ ແລະ ຄອບຄົວ.

ໃນຕອນບ່າຍຂອງວັນດຽວກັນນີ້, ເວລາ 13:00 ໂມງ ໄດ້ມີພິທີແຫ່ລູກຄ ແລະ ແຂ່ງຂັນກິລາປະເພນີຕ່າງໆທີ່ເດີ່ນພະທາດຫຼວງ ລະຫວ່າງ ທີມການນຳພັກ-ລັດ ກັບທີມປະຊາຊົນ ແລະ ໃນຕອນຄ່ຳເວລາ 19:00 ໂມງ ມີພິທີຈູດທຽນບອງທຽນ ແລະ ຈູດບັ້ງໄຟດອກ ເພື່ອສັກກາລະບູຊາພະທາດຫຼວງ ແລະ ກິດຈະກຳອື່ນໆ ຕາມຮີດຄອງປະເພນີລາວ.

ການນຳພັກ-ລັດ ພ້ອມດ້ວຍ ຊາວພຸດຮ່ວມໃສ່ບາດໃນບຸນນະມັດສະການພຣະທາດຫຼວງວຽງຈັນ

ການນຳພັກ-ລັດ ພ້ອມດ້ວຍ ຊາວພຸດຮ່ວມໃສ່ບາດໃນບຸນນະມັດສະການພຣະທາດຫຼວງວຽງຈັນ
ການນຳພັກ-ລັດ ພ້ອມດ້ວຍ ຊາວພຸດຮ່ວມໃສ່ບາດໃນບຸນນະມັດສະການພຣະທາດຫຼວງວຽງຈັນ
ການນຳພັກ-ລັດ ພ້ອມດ້ວຍ ຊາວພຸດຮ່ວມໃສ່ບາດໃນບຸນນະມັດສະການພຣະທາດຫຼວງວຽງຈັນ
ການນຳພັກ-ລັດ ພ້ອມດ້ວຍ ຊາວພຸດຮ່ວມໃສ່ບາດໃນບຸນນະມັດສະການພຣະທາດຫຼວງວຽງຈັນ
ການນຳພັກ-ລັດ ພ້ອມດ້ວຍ ຊາວພຸດຮ່ວມໃສ່ບາດໃນບຸນນະມັດສະການພຣະທາດຫຼວງວຽງຈັນ

ພາບ-ຂ່າວ:ຄຳໂຖ+ດວງກາມົນ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

◆ ຂ່າວພາຍໃນ · 15:59 ໂມງ · ອ່ານ 5 ຄັ້ງ

ບາດກ້າວສຳຄັນ! ການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ ແມ່ນຄວາມພະຍາຍາມຂອງພັກ-ລັດ ຕະຫລອດຫລາຍທົດສະວັດຜ່ານມາ



ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ຂອງ ສປປ ລາວ ໃນເດືອນພະຈິກ 2026 ແມ່ນບາດກ້າວອັນສຳຄັນຂອງປະເທດຊາດ ແລະ ສະແດງໃຫ້ເຫັນເຖິງຄວາມພະຍາຍາມຂອງພັກ ແລະ ລັດຖະບານ ສປປ ລາວ ຕະຫລອດຫລາຍທົດສະວັດ ໃນການພັດທະນາເສດຖະກິດ-ສັງຄົມ ຢ່າງຕໍ່ເນື່ອງ, ຊຶ່ງ ສປປ ລາວ ມີກຳນົດຫລຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ຢ່າງເປັນທາງການ ໃນວັນທີ 24 ພະຈິກ 2026 ໂດຍອີງຕາມຍັດຕິຂອງ ສະມັດຊາໃຫຍ່ ສະຫະປະຊາຊາດ, ສະບັບເລກທີ A/RES/76/8, ລົງວັນທີ 24 ພະຈິກ 2021, ຊຶ່ງການຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແມ່ນອີງໃສ່ 3 ເງື່ອນໄຂ ຄື: ລາຍໄດ້ແຫ່ງຊາດສະເລ່ຍຕໍ່ຫົວຄົນ (GNI), ດັດສະນີຊັບສິນມະນຸດ (HAI), ດັດສະນີຄວາມບອບບາງທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ (EVI).

ຕະຫລອດໄລຍະຜ່ານມາ ສປປ ລາວ ໄດ້ກຳນົດນະໂຍບາຍ ແລະ ຖືເປັນບຸລິມະສິດແຫ່ງຊາດ ໃນການລຶບລ້າງຄວາມທຸກຍາກ. ນັບແຕ່ປີ 2000 ເປັນຕົ້ນມາ ພັກ-ລັດຖະບານ ສປປ ລາວ ໄດ້ມີຄວາມໝາຍໝັ້ນຢ່າງຕັ້ງໜ້າ ແລະ ໄດ້ພະຍາຍາມຢ່າງສຸດຄວາມສາມາດ ເພື່ອນຳພາປະເທດຊາດຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ມາຮອດເດືອນ ກຸມພາ 2021, ສປປ ລາວ ໄດ້ບັນລຸການປະເມີນຄົບທັງ 3 ເງື່ອນໄຂຂອງການຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ໄດ້ສືບຕໍ່ຜ່ານເງື່ອນໄຂຕະຫລອດໄລຍະ 5 ປີທີ່ຜ່ານມາ. ຜົນສຳເລັດນີ້, ໄດ້ສະທ້ອນໃຫ້ເຫັນເຖິງການພັດທະນາຂອງ ສປປ ລາວ ທີ່ດຳເນີນມາຫລາຍທົດສະວັດ. ອັດຕາຄວາມທຸກຍາກແຫ່ງຊາດໄດ້ຫລຸດລົງຈາກ 46% ໃນປີ 1993 ເຫລືອ 15% ໃນປັດຈຸບັນ, ອັດຕາການເສຍຊີວິດ ຂອງເດັກອາຍຸຕ່ຳກວ່າ 5 ປີ ໄດ້ຫລຸດລົງຫລາຍກວ່າເຄິ່ງໜຶ່ງ ຈາກຫລາຍກວ່າ 100 ຄົນ ຕໍ່ອັດຕາການເກີດ 1.000 ຄົນ ໃນປີ 2000 ເຫລືອປະມານ 40 ຄົນ ໃນປີ 2022. ພ້ອມດຽວກັນນັ້ນ, ປະຊາຊົນສາມາດເຂົ້າເຖິງໄຟຟ້າ ໄດ້ເພີ່ມຂຶ້ນຈາກ 42,6% ເປັນເກືອບ 100%. ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໄດ້ເພີ່ມຂຶ້ນຈາກຕ່ຳກວ່າ 70% ເປັນ 87,5% ແລະ ຈຳນວນປີສະເລ່ຍຂອງການຮຽນໜັງສື ໄດ້ເພີ່ມຂຶ້ນຈາກ 4,2 ປີ ເປັນເກືອບ 6 ປີ, ຊຶ່ງຜົນສຳເລັດເຫລົ່ານີ້ ໄດ້ມີພື້ນຖານມາຈາກການຂະຫຍາຍຕົວທາງເສດຖະກິດ ໂດຍອັດຕາການຂະຫຍາຍຕົວຂອງເສດຖະກິດຢູ່ທີ່ຕົວສະເລ່ຍ 5,6% ໃນລະຫວ່າງປີ 2015 ຫາ 2025.

ການກະກຽມສຳລັບໄລຍະຂ້າມຜ່ານ ການຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຈະເປັນການກ້າວເຂົ້າສູ່ໄລຍະຂ້າມຜ່ານຂອງ ສປປ ລາວ ເນື່ອງຈາກບາງມາດຕະການສະໜັບສະໜຸນດ້ານການຄ້າ, ການເງິນ ແລະ ການສະໜັບສະໜຸນດ້ານວິຊາການ ໃນຂອບຫລາຍຝ່າຍ ຈະເລີ່ມທັນປ່ຽນໄປສູ່ເງື່ອນໄຂທີ່ມີສິດທິພິເສດໜ້ອຍລົງ, ຊຶ່ງບາງອັນຈະມີຜົນໃນທັນທີ, ແຕ່ສ່ວນໃຫຍ່ຈະຄ່ອຍໆມີການປ່ຽນແປງໃນແຕ່ລະໄລຍະປະມານ 3 ຫາ 4 ປີ.

ການຂ້າມຜ່ານການອອກຈາກສະຖານະພາບດ້ອຍພັດທະນາ ແມ່ນການກ້າວເຂົ້າສູ່ເສັ້ນທາງທີ່ ສປປ ລາວ ຍັງບໍ່ທັນຄຸ້ນເຄີຍ, ຊຶ່ງໄດ້ຮຽກຮ້ອງໃຫ້ການຊີ້ທິດເຍືອງທາງຢ່າງລະມັດລະວັງ, ມີຄວາມຮູ້ຄວາມຊຳນານ ແລະ ໄດ້ຮັບການສືບຕໍ່ສະໜັບສະໜຸນຢ່າງຕໍ່ເນື່ອງຈາກປະຊາຄົມສາກົນ ກໍຄືຄູ່ຮ່ວມພັດທະນາ. ສປປ ລາວ ໄດ້ຖະແຫລງເຈດຈຳນົງຂອງຕົນຢ່າງຊັດເຈນຕໍ່ ກອງປະຊຸມສະມັດຊາໃຫຍ່ ອົງການສະຫະປະຊາຊາດ ໃນເດືອນກັນຍາ 2026 ທີ່ຜ່ານມາ ໂດຍຮຽກຮ້ອງໃຫ້ມີມາດຕະການສະໜັບສະໜຸນຈາກສາກົນ ໃນໄລຍະຂ້າມຜ່ານທີ່ສາມາດຄາດຄະເນໄດ້ ແລະ ຕໍ່ເນື່ອງ, ລວມທັງທຶນທີ່ມີເງື່ອນໄຂຜ່ອນຜັນ ເພື່ອຮັບປະກັນຜົນສຳເລັດທີ່ຍາດມາໄດ້ ໃນຂະນະທີ່ ສປປ ລາວ ກະກຽມກ້າວເຂົ້າສູ່ຍຸກຫລັງການຫລຸດພົ້ນຈາກສະຖານະພາບດ້ອຍພັດທະນາ.

ເພື່ອຮັບມືຕໍ່ກັບການຂ້າມຜ່ານອັນສຳຄັນນີ້, ລັດຖະບານ ສປປ ລາວ ໄດ້ຮັບຮອງເອົາ ແຜນຍຸດທະສາດການ ຂ້າມຜ່ານຢ່າງໂລ່ງລຽງ ເພື່ອອອກຈາກສະຖານະພາບດ້ອຍພັດທະນາ ໃນເດືອນທັນວາ 2023, ຊຶ່ງແຜນຍຸດທະສາດດັ່ງກ່າວ ໄດ້ກຳນົດນະໂຍບາຍ ເພື່ອໃຫ້ ສປປ ລາວ ກະກຽມຄວາມພ້ອມທີ່ດີສຳລັບການຫລຸດພົ້ນ ແລະ ຮັບມືຕໍ່ກັບຜົນກະທົບຫລັງ ການປ່ຽນແປງທີ່ຕາມມາ ໃນຂົງເຂດນະໂຍບາຍຫລັກ ລວມທັງຄວາມຍືນຍົງດ້ານເສດຖະກິດມະຫາພາກ, ການເງິນ, ການຄ້າ, ການລົງທຶນ ແລະ ການຫັນປ່ຽນເສດຖະກິດ, ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງໄພພິບັດ, ພ້ອມດ້ວຍບັນດາບຸລິມະສິດໃນການຈັດຕັ້ງປະຕິບັດ, ຊຶ່ງໄດ້ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີ ຄັ້ງທີ 9 ແລະ ຄັ້ງທີ 10.

ໃນໄລຍະບໍ່ດົນມານີ້, ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ອອກຄຳສັ່ງສະບັບເລກທີ 48/ນຍ, ລົງວັນທີ 6 ສິງຫາ 2026 ໄດ້ສະເໜີໃຫ້ບັນດາກະຊວງຈັດຕັ້ງປະຕິບັດນະໂຍບາຍ 12 ຂໍ້ ທີ່ໄດ້ແນະນຳໄວ້ໃນບົດປະເມີນຄວາມພ້ອມ ເພື່ອເລັ່ງລັດການອາງມາດຕະການຮອງຮັບຕໍ່ກັບຜົນກະທົບ ທັງໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຂອງ ການຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ໂດຍເຊື່ອມສານເຂົ້າກັບແຜນຍຸດທະສາດການຂ້າມຜ່ານຢ່າງໂລ່ງລຽງ. ບັນດານະໂຍບາຍເຫລົ່ານີ້ ຖືກແນະນຳໃຫ້ພິຈາລະນາຈັດຕັ້ງປະຕິບັດ ເພື່ອຮອງຮັບຕໍ່ກັບການປ່ຽນແປງສະເພາະດ້ານການຄ້າ, ການຊ່ວຍເຫລືອທາງການເງິນເພື່ອການພັດທະນາ ແລະ ການສະໜັບສະໜຸນໃນຂອບຫລາຍຝ່າຍ ທີ່ຈະມີຜົນທັນທີ ຫລື ເລີ່ມທີ່ຈະມີຜົນ ພາຍຫລັງທີ່ປະເທດຫລຸດພົ້ນອອກຈາກສະຖານະພາບດັ່ງກ່າວ.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 11:40 ໂມງ · ອ່ານ 5 ຄັ້ງ

ລາວ ແລະ ມາເລເຊຍ ເພີ່ມທະວີຮັດແໜ້ນການພົວພັນຮ່ວມມືສອງຝ່າຍ ພ້ອມລົງນາມຮ່ວມມືດ້ານການຝຶກອົບຮົມນັກການທູດ ແລະ ຊຸກຍູ້ການຄ້າ-ການລົງທຶນ



ໃນລະຫວ່າງວັນທີ 22-24 ພະຈິກ 2026 ນີ້, ທ່ານ ທອງສະຫວັນ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແລະ ພັນລະຍາ ໄດ້ນຳພາຄະນະເດີນທາງຢ້ຽມຢາມ ປະເທດມາເລເຊຍ ຢ່າງເປັນທາງການ ຕາມຄຳເຊີນຂອງ ທ່ານ ໂມຮາມັດ ບິນ ຮາຈີ ຮາຊັນ ລັດຖະມົນຕີກະຊວງ ການຕ່າງປະເທດ ແຫ່ງ ມາເລເຊຍ.

ໃນວັນທີ 23 ພະຈິກ 2026 ທີ່ໂຮງແຮມແຊງກຣີ ລາ ນະຄອນຫຼວງກົວລາລຳເປ, ສອງຝ່າຍໄດ້ພົບປະຫາລື ແລະ ທົບທວນຄືນການພົວພັນຮ່ວມມືລະຫວ່າງສອງ ປະເທດໃນໄລຍະຜ່ານມາ ພ້ອມທັງປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນເພື່ອຊຸກຍູ້ການຮ່ວມມືສອງຝ່າຍໃນ ຕໍ່ໜ້າ. ທັງສອງຝ່າຍໄດ້ສະແດງຄວາມປິຕິຍິນດີທີ່ເຫັນວ່າ ສາຍພົວພັນມິດຕະພາບຖານເພື່ອນມິດອາຊຽນ ລະຫວ່າງ ລາວ ແລະ ມາເລເຊຍ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ຕະຫຼອດໄລຍະ 6 ທົດສະວັດຜ່ານມາ ເຊິ່ງ ສະແດງອອກຜ່ານການແລກປ່ຽນການ ຢ້ຽມຢາມຂອງການນຳຂັ້ນສູງ ກໍຄືການໄປ ມາຫາສູ່ກັນລະຫວ່າງປະຊາຊົນສອງ ປະເທດຢ່າງເປັນປົກກະຕິ.

ພ້ອມກັນນີ້, ສອງຝ່າຍໄດ້ຕີລາຄາສູງ ຕໍ່ຜົນສຳເລັດຂອງການຮ່ວມມືໃນດ້ານຕ່າງ ໆ ເປັນຕົ້ນແມ່ນ ການເມືອງ, ຄວາມໝັ້ນ ຄົງ, ເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ກະສິກຳ, ພະລັງງານສະອາດ, ທະນາຄານ, ການເງິນ, ໂລຈິສຕິກ, ການ ກໍ່ສ້າງ, ໂຮງແຮມ ແລະ ການທ່ອງທ່ຽວ ເຊິ່ງໄດ້ສ້າງວຽກເຮັດງານທຳ ແລະ ປະກອບສ່ວນສຳຄັນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມຂອງທັງສອງປະເທດ. ທັງສອງຝ່າຍຍັງເຫັນດີເປັນເອກະພາບໃນ ການສືບຕໍ່ຊຸກຍູ້ການຮ່ວມມືດ້ານການຄ້າ ແລະ ການລົງທຶນໃຫ້ຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະໃນຂະແໜງການບຸລິມະສິດ ທີ່ມີທ່າແຮງ.

ໃນໂອກາດນີ້, ທ່ານ ໂມຮາມັດ ບິນ ຮາຈີ ຮາຊັນ ໄດ້ສະແດງຄວາມຍິນດີຕ້ອນ ຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຄັ້ງນີ້ ຂອງທ່ານ ທອງສະຫວັນ ພົມວິຫານ ເຊິ່ງ ເປັນຄັ້ງທຳອິດພາຍຫຼັງທີ່ທ່ານໄດ້ຮັບການ ແຕ່ງຕັ້ງເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ. ຂະນະດຽວກັນ, ທ່ານ ຮອງນາຍົກລັດຖະມົນຕີ ທອງສະຫວັນ ພົມວິຫານ ກໍໄດ້ສະແດງຄວາມຂອບໃຈຕໍ່ ການຕ້ອນຮັບອັນອົບອຸ່ນ ແລະ ໄດ້ເຊື້ອ ເຊີນ ທ່ານ ໂມຮາມັດ ບິນ ຮາຈີ ຮາຊັນ ຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ແລະ ເປັນປະທານຮ່ວມກອງປະຊຸມ ຄະນະກຳມາທິການຮ່ວມ ວ່າດ້ວຍການ ຮ່ວມມືສອງຝ່າຍ (JCBC) ຄັ້ງທີ 4 ທີ່ ສປປ ລາວ ຈະເປັນເຈົ້າພາບໃນປີ 2027 ຈະມາເຖິງ. ນອກຈາກນັ້ນ, ທັງສອງຝ່າຍ ຍັງໄດ້ແລກປ່ຽນຄຳຄິດຄຳເຫັນກ່ຽວກັບ ສະພາບການພາກພື້ນ ແລະ ສາກົນ ທີ່ມີ ຄວາມສົນໃຈຮ່ວມກັນ.

ພິທີແລກປ່ຽນເອກະສານຮ່ວມມື ແລະ ກິດຈະກຳສົ່ງເສີມທຸລະກິດ

ພາຍຫຼັງສຳເລັດການພົບປະສອງ ຝ່າຍ, ລັດຖະມົນຕີກະຊວງການຕ່າງ ປະເທດທັງສອງປະເທດ ພ້ອມດ້ວຍ ພາກສ່ວນກ່ຽວຂ້ອງ ໄດ້ເຂົ້າຮ່ວມພິທີ ແລກປ່ຽນບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືໃນວຽກງານ ການຝຶກອົບຮົມສຳລັບນັກການທູດ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ມາເລເຊຍ.

ນອກຈາກນີ້, ໃນການຢ້ຽມຢາມຄັ້ງ ນີ້ ທ່ານ ທອງສະຫວັນ ພົມວິຫານ ຍັງໄດ້ ຢ້ຽມຢາມບໍລິສັດ ລິດໄຟແຫ່ງຊາດ (KTMB), ເຂົ້າຮ່ວມເປັນປະທານກ່າວ ເປີດກອງປະຊຸມເວທີປຶກສາຫາລືພາກ ທຸລະກິດ ລາວ-ມາເລເຊຍ 2026 ແລະ ເປັນປະທານພິທີເປີດບໍລິສັດພິງສະຫວັນ ຢູ່ ມາເລເຊຍ ເພື່ອສົ່ງເສີມການຮ່ວມມືທາງ ດ້ານເສດຖະກິດ, ການຄ້າ ແລະ ການ ລົງທຶນລະຫວ່າງສອງປະເທດໃຫ້ຂະຫຍາຍ ຕົວຍິ່ງຂຶ້ນ. ການຢ້ຽມຢາມຄັ້ງນີ້ໄດ້ປະສົບ ຜົນສຳເລັດຢ່າງຈົບງາມ ແລະ ເປັນການ ປະກອບສ່ວນສຳຄັນເຂົ້າໃນການພັດທະນາ ສາຍພົວພັນຮ່ວມມືສອງຝ່າຍຢ່າງຕໍ່ເນື່ອງ.

ຂ່າວ-ພາບ: ກົມການຂ່າວ, ກະຊວງ ການຕ່າງປະເທດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 19 ໃນສະບັບນີ້

ໂຄສະນາ
ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ
ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ທ່ອງທ່ຽວ · 16:29 ໂມງ · ອ່ານ 4 ຄັ້ງ

ພາກພູມໃຈ! ນະຄອນປາກເຊ ຄວ້າລາງວັນລະດັບອາຊີ ດ້ານການພັດທະນາຕົວເມືອງສີຂຽວ ແລະ ທົນທານຕໍ່ສະພາບດິນຟ້າອາກາດ



ນະຄອນປາກເຊ ແຂວງຈຳປາສັກ ສ້າງຊື່ສຽງໃຫ້ແກ່ ສປປ ລາວ ໃນເວທີສາກົນ ຫຼັງສາມາດຄວ້າລາງວັນ 2026 Asian Townscape Jury's Award ມາຄອງໄດ້ຢ່າງສຳເລັດ ຈາກຜົນງານການພັດທະນາຕົວເມືອງແບບຍືນຍົງ ແລະ ສາມາດປັບຕົວຮັບມືກັບການປ່ຽນແປງຂອງສະພາບດິນຟ້າອາກາດໄດ້ຢ່າງໂດດເດັ່ນ.

ພິທີມອບລາງວັນອັນຊົງກຽດ ທີ່ປະເທດເກົາຫຼີໃຕ້ ພິທີມອບ-ຮັບລາງວັນດັ່ງກ່າວ ໄດ້ຈັດຂຶ້ນຢ່າງເປັນທາງການ ເມື່ອວັນທີ 20 ພະຈິກ 2026 ທີ່ຜ່ານມາ ຢູ່ສຳນັກງານໃຫຍ່ການເຄຫະ ແລະ ທີ່ດິນ ໃນນະຄອນຈິນຈູ (Jinju) ສາທາລະນະລັດເກົາຫຼີ (ເກົາຫຼີໃຕ້) ໂດຍມີຄະນະບໍລິຫານງານນະຄອນປາກເຊ ເດີນທາງໄປເຂົ້າຮັບລາງວັນອັນຊົງກຽດນີ້ດ້ວຍຕົນເອງ.

ວິໄສທັດ "ເມືອງສີຂຽວ ແລະ ທັນສະໄໝ" ສຳລັບເຫດຜົນຫຼັກທີ່ເຮັດໃຫ້ນະຄອນປາກເຊ ໄດ້ຮັບການຄັດເລືອກຈາກຄະນະກຳມະການລະດັບພາກພື້ນ ແມ່ນຍ້ອນຄວາມພະຍາຍາມ ແລະ ວິໄສທັດທີ່ຊັດເຈນຂອງອົງການປົກຄອງທ້ອງຖິ່ນ ໃນການວາງແຜນ ແລະ ພັດທະນາຕົວເມືອງໃຫ້ກ້າວໄປສູ່ການເປັນ "ເມືອງສີຂຽວ ແລະ ທັນສະໄໝ" (Green and Smart City) ທີ່ເນັ້ນຄວາມສົມດຸນລະຫວ່າງການຂະຫຍາຍຕົວທາງເສດຖະກິດ, ການປັບປຸງສະພາບແວດລ້ອມໃຫ້ໜ້າຢູ່ ລວມເຖິງການກຽມຄວາມພ້ອມເພື່ອຫຼຸດຜ່ອນຄວາມສ່ຽງຈາກໄພພິບັດທາງທຳມະຊາດ ແລະ ສະພາບອາກາດທີ່ປ່ຽນແປງໃນປັດຈຸບັນ.

ທັງນີ້ ລາງວັນ Asian Townscape Award ຖືເປັນໜຶ່ງໃນລາງວັນດ້ານການພັດທະນາຜັງເມືອງທີ່ມີຊື່ສຽງໃນພາກພື້ນອາຊີ ເຊິ່ງຈັດຂຶ້ນເພື່ອຍ້ອງຍໍຊົມເຊີຍຕົວເມືອງ ຫຼື ໂຄງການທີ່ມີຜົນງານດີເດັ່ນໃນການສ້າງສະພາບແວດລ້ອມການດຳລົງຊີວິດທີ່ມີຄຸນນະພາບ ແລະ ຍືນຍົງໃຫ້ແກ່ປະຊາຊົນ. ການໄດ້ຮັບລາງວັນໃນຄັ້ງນີ້ ບໍ່ພຽງແຕ່ເປັນຄວາມພາກພູມໃຈຂອງຊາວນະຄອນປາກເຊ ແລະ ແຂວງຈຳປາສັກ ເທົ່ານັ້ນ ແຕ່ຍັງເປັນການຢັ້ງຢືນເຖິງຄວາມກ້າວໜ້າຂອງການພັດທະນາຕົວເມືອງໃນ ສປປ ລາວ ອີກດ້ວຍ.

ທີ່ມາຂອງຂ່າວ: The Star

ເຕັກໂນໂລຊີ

ເຕັກໂນໂລຊີ · 10:20 ໂມງ · ອ່ານ 6 ຄັ້ງ

ຊ໋ອກວົງການເທັກ! ຫຸ້ນ Nvidia ພຸ່ງທະຍານ 30% ຫຼັງບອດບໍລິຫານມີມະຕິເອກະສັນດຶງ “ເຈນ ເຊນ ຫວງ” ກັບຄືນນັ່ງຕຳແໜ່ງ CEO ອີກຄັ້ງ



ກາຍເປັນກະແສຮືຮາໄປທົ່ວໂລກທຸລະກິດ ແລະ ເທັກໂນໂລຢີ ເມື່ອຄະນະກຳມະການບໍລິຫານ (Board) ຂອງບໍລິສັດຍັກໃຫຍ່ດ້ານຊິບ AI ຢ່າງ Nvidia (NVDA) ໄດ້ມີມະຕິເປັນເອກະສັນ ແຕ່ງຕັ້ງໃຫ້ "ເຈນເຊນ ຫວງ" (Jensen Huang) ກັບຄືນມາດຳລົງຕຳແໜ່ງ ປະທານ ແລະ ປະທານເຈົ້າໜ້າທີ່ບໍລິຫານ (CEO) ອີກຄັ້ງໃນທັນທີ ຫຼັງຈາກທີ່ລາວຫາກໍປະກາດລາອອກໄປໄດ້ພຽງ 11 ວັນເທົ່ານັ້ນ ທ່າມກາງຂ່າວອື້ສາວ ແລະ ການສອບສວນດ້ານຄວາມໝັ້ນຄົງ.

ການຕັດສິນໃຈຄັ້ງສຳຄັນນີ້ ສົ່ງຜົນໃຫ້ລາຄາຫຸ້ນຂອງ Nvidia ດີດຕົວພຸ່ງສູງຂຶ້ນເຖິງ 30% ຟື້ນຕົວຈາກຊ່ວງທີ່ເຄີຍຕົກຕ່ຳລົງຢ່າງໜັກໃນໄລຍະຜ່ານມາ.

ເບື້ອງຫຼັງການກັບມາ ແລະ ແຮງກົດດັນຈາກຜູ້ມີອິດທິພົນ

ແຫຼ່ງຂ່າວລະບຸວ່າ ການດຶງຕົວ ເຈນ ເຊນ ຫວງ ກັບຄືນມານຳທັບບໍລິສັດອີກຄັ້ງ ເກີດຂຶ້ນຫຼັງຈາກບອດບໍລິຫານໄດ້ຮັບແຮງກົດດັນ ແລະ ສຽງຮຽກຮ້ອງຢ່າງໜັກຈາກກຸ່ມຜູ້ຖືຫຸ້ນລາຍໃຫຍ່ ລວມໄປເຖິງບຸກຄົນສຳຄັນລະດັບໂລກຢ່າງ ໂດນັລ ທຣຳ (Donald Trump) ແລະ ອີລອນ ມັສ (Elon Musk) ທີ່ສະແດງຄວາມກັງວົນວ່າ ການຂາດຜູ້ນຳຫຼັກຢ່າງຫວງ ອາດສົ່ງຜົນກະທົບຢ່າງຮຸນແຮງຕໍ່ລະບົບຕ່ອງໂສ້ການຜະລິດ (Supply Chain) ຂອງອຸດສາຫະກຳ AI ທົ່ວໂລກ.

ເດີນໜ້າທຸລະກິດຄຽງຄູ່ການກວດສອບ

ເຖິງວ່າຈະກັບມາຮັບຕຳແໜ່ງແລ້ວ ແຕ່ການສອບສວນອິດສະຫຼະກໍລະນີຄວາມເຊື່ອມໂຍງກັບສາຍລັບຕ່າງຊາດ ລວມເຖິງຄະດີທີ່ອະດີດຜູ້ບໍລິຫານ Megaspeed ຖືກສອບສວນເລື່ອງການລັກລອບສົ່ງອອກຊິບໄປປະເທດຈີນ ຍັງຄົງດຳເນີນຕໍ່ໄປ ເຊິ່ງທາງ ເຈນເຊນ ຫວງ ກໍພ້ອມໃຫ້ຄວາມຮ່ວມມືຢ່າງເຕັມທີ່. ພ້ອມກັນນີ້ Nvidia ຍັງໄດ້ຈັດຕັ້ງຄະນະກຳມະການກຳກັບດູແລດ້ານຄວາມໝັ້ນຄົງ ແລະ ການຄວບຄຸມການສົ່ງອອກຂຶ້ນມາຮັບມືກັບບັນຫານີ້ໂດຍສະເພາະ.

ໃນຂະນະດຽວກັນ ດ້ານການດຳເນີນທຸລະກິດຂອງບໍລິສັດຍັງຄົງເດີນໜ້າຢ່າງຕໍ່ເນື່ອງ ບໍ່ວ່າຈະເປັນການຂະຫຍາຍໂຄງສ້າງພື້ນຖານ AI ຮ່ວມກັບພັນທະມິດ, ການເປີດໂຕຜະລິດຕະພັນໃໝ່ຢ່າງເດັສທ໊ອບ RTX Spark, ຊຸດພັດທະນາ DGX Spark ລວມເຖິງການຂະຫຍາຍຄວາມຮ່ວມມືດ້ານການປະມວນຜົນຮ່ວມກັບ Microsoft ເພື່ອຮັກສາຄວາມເປັນຜູ້ນຳໃນຕະຫຼາດໂລກ.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ

◆ ຂ່າວຕ່າງປະເທດ · 11:10 ໂມງ · ອ່ານ 10 ຄັ້ງ

ປິດຄະດີສະເທືອນຂວັນ! ຕຳຫຼວດສືບນະຄອນບານແກະຮອຍບຸກຈັບຜົວມຽນມາໄວ 21 ປີ ມືຫັ່ນສົບເມຍ ຫຼັງໜີໄປກົບດານຢູ່ອ້ອມນ້ອຍ



ຕຳຫຼວດສືບນະຄອນບານຕາມຈັບ "ທ້າວ ບັນຍາ" ຊາວມຽນມາ ຜູ້ຕ້ອງຫາຄະດີຂ້າຫັ່ນສົບພັນລະຍາ ກ່ອນແຍກຊິ້ນສ່ວນຍັດໃສ່ກະສອບຖິ້ມກອງຂີ້ເຫຍື້ອທ້າຍຊອຍລາດພ້າວ 109 ພົບຮອຍເລືອດທົ່ວຫ້ອງພັກ ກ້ອງວົງຈອນປິດຈັບພາບຂົນກະສອບຖິ້ມ 3 ຮອບ ເຈົ້າຕົວໜີໄປກົບດານພື້ນທີ່ອ້ອມນ້ອຍ ຈ.ສະໝຸດສາຄອນ ເບື້ອງຕົ້ນຄາດວ່າເປັນປົມຫຶງຫວງ ເລັ່ງສອບສວນຂະຫຍາຍຜົນຕາມຫາຊິ້ນສ່ວນຮ່າງກາຍທີ່ຍັງສູນຫາຍ.

ເມື່ອເວລາປະມານ 22:30 ໂມງ ວັນທີ 23 ພະຈິກ 2569 ມີລາຍງານຄວາມຄືບໜ້າຄະດີຄາດຕະກຳສະເທືອນຂວັນ ພາຍໃນຊອຍລາດພ້າວ 109 ແຍກ 5 ແຂວງຄອງຈັ່ນ ເຂດບາງກະປິ ບາງກອກຫຼັງເຈົ້າໜ້າທີ່ຕຳຫຼວດສາມາດຕິດຕາມຈັບກຸມຜູ້ຕ້ອງຫາໄດ້ແລ້ວ ພາຍຫຼັງຫຼົບໜີອອກຈາກພື້ນທີ່ເກີດເຫດ ໂດຍພົບຕົວຢູ່ພື້ນທີ່ແຂວງສະໝຸດສາຄອນ.

ການຈັບກຸມຄັ້ງນີ້ເປັນຜົນງານຂອງຕຳຫຼວດສືບນະຄອນບານ (IDMB) ນຳໂດຍ ພ.ຕ.ຕ. ໂຊຕິວັດ ເຫຼືອງວິໄລ ຜູ້ບັງຄັບການສືບສວນສອບສວນ ກອງບັນຊາການຕຳຫຼວດນະຄອນບານ ຮ່ວມກັບກອງກຳກັບການສືບສວນ ກອງບັງຄັບການຕຳຫຼວດນະຄອນບານ 4 ແລະ ຝ່າຍສືບສວນ ສນ.ລາດພ້າວ.

ໂດຍເຈົ້າໜ້າທີ່ສາມາດຈັບກຸມ Mr. Banyar Soe Hlaing ຫຼື ທ້າວ ບັນຍາ ອາຍຸ 21 ປີ ສັນຊາດມຽນມາ ຜູ້ຕ້ອງຫາຕາມໝາຍຈັບໃນຄະດີຄາດຕະກຳພັນລະຍາຊາວມຽນມາຂອງຕົນເອງ ກ່ອນແຍກຊິ້ນສ່ວນຮ່າງກາຍໃສ່ກະສອບ ແລະ ຖົງຢາງ ນຳໄປຖິ້ມອຳພາງບໍລິເວນກອງຂີ້ເຫຍື້ອທ້າຍຊອຍລາດພ້າວ 109 ແຍກ 5.

ພາຍຫຼັງເກີດເຫດ ເຈົ້າໜ້າທີ່ໄດ້ເຂົ້າກວດສອບຫ້ອງພັກຊັ້ນ 3 ຂອງອາພາດເມັນແຫ່ງໜຶ່ງ ເຊິ່ງຢູ່ຫ່າງຈາກຈຸດພົບຊິ້ນສ່ວນສົບປະມານ 20 ແມັດ ໂດຍໃຊ້ເຄື່ອງມືພິເສດກວດຫາຫຼັກຖານ ກ່ອນພົບຮອຍເລືອດຈຳນວນຫຼວງຫຼາຍກະຈາຍຢູ່ພາຍໃນຫ້ອງ ໂດຍສະເພາະບໍລິເວນຫ້ອງນ້ຳທີ່ມີຮອຍເລືອດໝາແໜ້ນ ສອດຄ່ອງກັບພຶດຕິການການກໍ່ເຫດທີ່ເຈົ້າໜ້າທີ່ກຳລັງລວບລວມພະຍານຫຼັກຖານ.

ຂະນະດຽວກັນ ພາບຈາກກ້ອງວົງຈອນປິດເມື່ອວັນທີ 18 ພະຈິກ ເວລາປະມານ 22:17 ໂມງ ສາມາດບັນທຶກພາບຜູ້ຕ້ອງຫາຂົນກະສອບ ແລະ ຖົງຢາງອອກຈາກຫ້ອງພັກລົງໄປຖິ້ມບໍລິເວນກອງຂີ້ເຫຍື້ອລວມ 3 ຮອບ ໂດຍຮອບສຸດທ້າຍພົບວ່າຖືຖົງທີ່ບັນຈຸຫົວອອກໄປຖິ້ມດ້ວຍຕົນເອງ ກ່ອນຈະເກັບຊັບສິນ ແລະ ຫຼົບໜີອອກຈາກທີ່ພັກໃນຊ່ວງແລງວັນທີ 22 ພະຈິກ ເຊິ່ງເປັນວັນພົບຊິ້ນສ່ວນສົບ.

ຊຸດສືບສວນຈຶ່ງເລັ່ງແກະຮອຍເສັ້ນທາງຫຼົບໜີ ກະທັ້ງພົບເບາະແສວ່າຜູ້ຕ້ອງຫາເດີນທາງໄປຫຼົບຊ່ອນຕົວຢູ່ພື້ນທີ່ ຕ.ອ້ອມນ້ອຍ ອ.ກະທຸ່ມແບນ ຈ.ສະໝຸດສາຄອນ ຈຶ່ງນຳກຳລັງເຂົ້າປິດລ້ອມ ແລະ ຈັບກຸມຕົວໄວ້ໄດ້ໃນທີ່ສຸດ.

ສຳລັບຜູ້ຕ້ອງຫາ ແລະ ຜູ້ເສຍຊີວິດເປັນຜົວເມຍຊາວມຽນມາ ໂດຍຝ່າຍຍິງມີ

ຕໍ່ໜ້າ 13

ປິດຄະດີສະເທືອນຂວັນ! ຕຳຫຼວດສືບມະຄອນບານແກະຮອຍບຸ... (ຕໍ່ຈາກໜ້າ 12)

ຊື່ຫຼິ້ນທີ່ໝູ່ເອີ້ນວ່າ “ແດນ” ຫຼື “ເພຍວ” ທັງສອງມີອາຍຸໄລ່ເລ່ຍກັນ ແລະ ເຂົ້າມາເຊົ່າຫ້ອງພັກຊັ້ນ 3 ຂອງອາພາດເມັນດັ່ງກ່າວຕັ້ງແຕ່ເດືອນສິງຫາທີ່ຜ່ານມາ ກ່ອນເຮັດວຽກກະທາງຄືນຢູ່ທີ່ໂຮງງານເຂົ້າຈີ່ພາຍໃນຊອຍລາດພ້າວ 140 ນຳກັນ.

ດ້ານພົດຕິການຄາດຕະກຳ ຈາກການກວດສອບເບື້ອງຕົ້ນພົບວ່າຄົນຮ້າຍແຍກຊິ້ນສ່ວນຮ່າງຜູ້ເສຍຊີວິດອອກເປັນ 4 ສ່ວນ ໄດ້ແກ່ ທ່ອນລຸ່ມ ລຳຕົວ ຫົວ ແລະ ຂໍ້ມືຂວາ ອີກທັງຍັງພົບລັກສະນະການທຳລາຍຫຼັກຖານເພື່ອຂັດຂວາງການພິສູດເອກະລັກ ທັງການລົບເນື້ອເຍື່ອ ບໍລິເວນປາຍນິ້ວມືຊ້າຍ ເຊືອນໃບໜ້າດ້ານຊ້າຍ ແລະ ເຊືອນບໍລິເວນຮູຫະອານໜັກອອກ.

ຂະນະນີ້ ເຈົ້າໜ້າທີ່ຍັງຄົງເລັ່ງຄົ້ນຫາຊິ້ນສ່ວນຮ່າງກາຍທີ່ສູນຫາຍ ໂດຍສະເພາະຂໍ້ມືຂວາ ແລະ ອະໄວຍະວະພາຍໃນ ເຊິ່ງຍັງພົບບໍ່ຄົບທັງໝົດ.

ເບື້ອງຕົ້ນ ເຈົ້າໜ້າທີ່ຢູ່ລະຫວ່າງຄວບຄຸມຕົວທ້າວ ບັນຍາ ກັບມາສອບປາກຄຳຢ່າງລະອຽດທີ່ ສນ.ລາດພ້າວ ເພື່ອສອບສວນເຖິງແຮງຈູງໃຈໃນການກໍ່ເຫດ ໂດຍແນວທາງເບື້ອງຕົ້ນຄາດວ່າອາດກ່ຽວຂ້ອງກັບບັນຫາຄອບຫົງຫອງ ແຕ່ຍັງຕ້ອງລໍຖ້າຜົນການສອບສວນ ແລະ ພະຍານຫຼັກຖານຢືນຢັນ ລວມເຖິງເລັ່ງຕິດຕາມຫາຊິ້ນສ່ວນທີ່ເຫຼືອ ເພື່ອນຳມາປະກອບສຳນວນຄະດີ ແລະ ດຳເນີນການຕາມກົດໝາຍຕໍ່ໄປ.

ທີ່ມາ: ສຳນັກຂ່າວ CIA ປະເທດໄທ

◆ ຂ່າວຕ່າງປະເທດ · 14:42 ໂມງ · ອ່ານ 9 ຄັ້ງ

ຈີນກຽມສົ່ງນັກບິນອະວະກາດ ປາກິສຖານຂຶ້ນສູ່ສະຖານີອະວະກາດທຽນກົງ ເປັນຄົນຕ່າງປະເທດຄົນທຳອິດທີ່ຮ່ວມພາລະກິດ!



ປັກກິ່ງ, 24 ພະຈິກ 2026 – ຈີນກຽມສົ່ງຍານອະວະກາດທີ່ມີມະນຸດຄວບຄຸມ Shenzhou-24 ຂຶ້ນສູ່ອະວະກາດ ໃນເວລາ 08:18 ໂມງ ຂອງວັນທີ 25 ພະຈິກ 2026 ຕາມເວລາປັກກິ່ງ ໂດຍຈະມີນັກບິນອະວະກາດຈາກປາກິສຖານຮ່ວມເດີນທາງໄປນຳ ນັບເປັນຄັ້ງທຳອິດທີ່ຄົນຕ່າງປະເທດໄດ້ຮ່ວມພາລະກິດບິນອະວະກາດມີມະນຸດຂອງຈີນ.

ອົງການອະວະກາດມະນຸດຂອງຈີນ (CMSA) ໄດ້ປະກາດລາຍຊື່ຄະນະນັກບິນອະວະກາດ 3 ຄົນ ໃນວັນທີ 24 ພະຈິກ ປະກອບມີ ຖັງ ຫົງໂປ (Tang Hongbo) ເຮັດໜ້າທີ່ຜູ້ບັນຊາການ, ອູ້ ອີ້ (Wu Yi) ເຮັດໜ້າທີ່ວິສະວະກອນການບິນ ແລະ ມູຮຳໝັດ ຊີຊານ ອາລີ (Muhammad Zeeshan Ali) ນັກບິນອະວະກາດຈາກປາກິສຖານ ເຮັດໜ້າທີ່ຜູ້ຊ່ຽວຊານດ້ານການທົດລອງ.

ພາລະກິດດັ່ງກ່າວຈະດຳເນີນການປ່ອຍຍານຈາກສູນສົ່ງຍານອະວະກາດ Jiuquan ທາງພາກຕາເວັນຕົກສຽງເໜືອຂອງຈີນ ໂດຍໃຊ້ຈະຫຼວດ Long March-2F. ຕາມການລາຍງານຂອງອົງການ CMSA ການກະກຽມຍານ ແລະ ຈະຫຼວດໄດ້ດຳເນີນໄປຕາມແຜນການ ແລະ ຄະນະນັກບິນມີສຸຂະພາບພ້ອມສຳລັບພາລະກິດ.

ຈຸດສຳຄັນຂອງພາລະກິດ Shenzhou-24 ແມ່ນການມີນັກບິນຈາກປາກິສຖານເຂົ້າຮ່ວມ ເຊິ່ງຈະເຮັດໃຫ້ Muhammad Zeeshan Ali ກາຍເປັນນັກບິນອະວະກາດຕ່າງຊາດຄົນທຳອິດທີ່ໄດ້ເດີນທາງໄປຢ້ຽມຢາມສະຖານີອະວະກາດ Tiangong ຂອງຈີນ.

ໃນໄລຍະທີ່ຢູ່ໃນວົງໂຄຈອນ ນັກບິນທັງສາມຈະດຳເນີນການທົດລອງທາງວິທະຍາສາດ ລວມທັງວຽກງານບຳລຸງຮັກສາສະຖານີອະວະກາດ. ສ່ວນນັກບິນປາກິສຖານຈະປະຕິບັດພາລະກິດໄລຍະສັ້ນ ແລະ ມີແຜນກັບຄືນໂລກດ້ວຍຍານ Shenzhou-23 ພ້ອມກັບນັກບິນທີ່ກຳລັງປະຈຳຢູ່ໃນສະຖານີ.

ທັງນີ້ ການຮ່ວມມືດ້ານອະວະກາດລະຫວ່າງຈີນ ແລະ ປາກິສຖານ ເປັນຜົນຈາກຂໍ້ຕົກລົງຮ່ວມມືທີ່ລົງນາມໃນເດືອນກຸມພາ 2025 ເພື່ອຝຶກຝົນ ແລະ ຄັດເລືອກນັກບິນປາກິສຖານເຂົ້າຮ່ວມພາລະກິດຢູ່ສະຖານີອະວະກາດຂອງຈີນ.

ພາລະກິດ Shenzhou-24 ຈຶ່ງຖືເປັນອີກກ້າວສຳຄັນຂອງໂຄງການອະວະກາດຈີນ ແລະ ສະທ້ອນເຖິງການຂະຫຍາຍຄວາມຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີອະວະກາດກັບປະເທດອື່ນໆ.

ທີ່ມາ: channelnewsasia/ ຮອຍເຕີ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວຕ່າງປະເທດ · 16:06 ໂມງ · ອ່ານ 7 ຄັ້ງ

ສະຫະລັດ ຂຶ້ນບັນຊີດຳບໍລິສັດ Megaspeed ໃນສິງກະໂປ ແລະ ເຄືອຂ່າຍໃນອາຊຽນ ປົມຄ້ອງສົ່ງໄສລັກລອບສົ່ງຊິບ AI ຂອງ Nvidia ໃຫ້ຈີນ



ກະຊວງພານິດສະຫະລັດ ໄດ້ປະກາດຂຶ້ນບັນຊີດຳ ທາງການຄ້າ (Entity List) ຕໍ່ບໍລິສັດ Megaspeed International ທີ່ມີສຳນັກງານໃຫຍ່ໃນສິງກະໂປ ພ້ອມດ້ວຍບໍລິສັດໃນເຄືອລວມທັງໝົດ 7 ແຫ່ງໃນພາກພື້ນອາຊີຕາເວັນອອກສຽງໃຕ້ ເມື່ອວັນທີ 23 ພະຈິກ 2026 ທີ່ຜ່ານມາ ຫຼັງກວດພົບຄວາມສ່ຽງສູງວ່າອາດມີການລັກລອບສົ່ງຕໍ່ຊິບ AI ຂັ້ນສູງຂອງບໍລິສັດ Nvidia ໄປຍັງປະເທດຈີນ ເຊິ່ງເປັນການລະເມີດມາດຕະການຄວບຄຸມການສົ່ງອອກຂອງສະຫະລັດ.

ລາຍລະອຽດມາດຕະການຂ້າບາດ ແລະ 7 ບໍລິສັດທີ່ຖືກຂຶ້ນບັນຊີດຳ

ພາຍໃຕ້ຄຳສັ່ງຂອງສຳນັກອຸດສາຫະກຳ ແລະ ຄວາມໝັ້ນຄົງ (BIS) ແຫ່ງກະຊວງພານິດສະຫະລັດ ບໍລິສັດທີ່ມີລາຍຊື່ໃນບັນຊີດຳນີ້ ຈະຖືກຫ້າມຊື້ ຫຼື ຮັບສົ່ງມອບຊິບ AI ແລະ ເຕັກໂນໂລຊີຂັ້ນສູງຈາກສະຫະລັດ ເວັ້ນເສຍແຕ່ຈະໄດ້ຮັບໃບອະນຸຍາດເປັນກໍລະນີພິເສດ ເຊິ່ງຕາມນະໂຍບາຍແລ້ວແມ່ນມີໂອກາດສູງທີ່ຈະຖືກປະຕິເສດ.

ສຳລັບລາຍຊື່ທັງ 7 ບໍລິສັດໃນອາຊຽນທີ່ຖືກຂຶ້ນບັນຊີດຳ ປະກອບມີ:

ສິງກະໂປ: Megaspeed International Pte. Ltd, Apex Enterprise Solutions (Singapore) Private Limited ແລະ Swiftdata Pte. Ltd.

ມາເລເຊຍ: MSFusion Sdn. Bhd., PT Megaspeed International ແລະ Speedmatrix Sdn Bhd

ໄທ: Megaspeed (Thailand) Co., Ltd.

ເບື້ອງຫຼັງປົມຂ່າວອື້ສາວທີ່ເຊື່ອມໂຍງກັບ Nvidia ແລະ ການເມືອງສະຫະລັດ

ບໍລິສັດ Megaspeed ເປັນຜູ້ໃຫ້ບໍລິການຄລາວ (Cloud) ແລະ ສູນຂໍ້ມູນ (Data Center) ທີ່ມີການເຕີບໂຕຢ່າງກ້າວກະໂດດ ໂດຍຊັບສິນຂອງບໍລິສັດໄດ້ພຸ່ງສູງຂຶ້ນຈາກ 33 ລ້ານໂດລາ ເປັນຫຼາຍກວ່າ 3,000 ລ້ານໂດລາ ພາຍໃນເວລາພຽງປີດຽວ ແລະ ຖືເປັນລູກຄ້າລາຍໃຫຍ່ທີ່ສັ່ງຊື້ຊິບຈາກ Nvidia ເປັນມູນຄ່າຫຼາຍພັນລ້ານໂດລາ. ທາງການສະຫະລັດ ແລະ ກະຊວງຍຸຕິທຳ ໄດ້ດຳເນີນການສືບສວນບໍລິສັດນີ້ມາຕັ້ງແຕ່ປີ 2024 ໃນຂໍ້ຫາລັກລອບສົ່ງຕໍ່ຊິບຄວບຄຸມໃຫ້ແກ່ບໍລິສັດໃນປະເທດຈີນ.

ເລື່ອງລາວດັ່ງກ່າວໄດ້ກາຍເປັນຂ່າວໃຫຍ່ລະດັບໂລກ ຫຼັງຈາກມີລາຍງານວ່າ ອາລິສ ຫວາ (Alice Huang) ອະດີດຜູ້ບໍລິຫານຂອງ Megaspeed ເຊິ່ງໜ່ວຍຂ່າວລັບສະຫະລັດສົງໄສວ່າເຮັດວຽກໃຫ້ລັດຖະບານຈີນ ມີຄວາມສຳພັນສ່ວນຕົວທີ່ໃກ້ຊິດກັບ ເຈນເຊນ ຫວາ (Jensen Huang) ຊີອີໂອຂອງ Nvidia.

ນອກຈາກນີ້ ຈັງຫວະເວລາຂອງການປະກາດຂຶ້ນບັນຊີດຳຍັງເປັນທີ່ຈັບຕາມອງຢ່າງຍິ່ງ ເນື່ອງຈາກເກີດຂຶ້ນພຽງບໍ່ເທົ່າໃດຊົ່ວໂມງ ຫຼັງຈາກຄະນະກຳມະການບໍລິຫານຂອງ Nvidia ປະກາດໃຫ້ ເຈນເຊນ ຫວາ ກັບຄືນມາຮັບຕຳແໜ່ງຊີອີໂອອີກຄັ້ງ (ຫຼັງຈາກທີ່ລາວໄດ້ລາອອກໄປເມື່ອວັນທີ 12 ພະຈິກທີ່ຜ່ານມາ) ທ່າມກາງແຮງກົດດັນຢ່າງໜັກໜ່ວງຈາກສະພາຄອງເກຣສ ແລະ ເຈົ້າໜ້າທີ່ລະດັບສູງໃນລັດຖະບານປະທານາທິບໍດີ ໂດນັລ ທຣຳ ທີ່ຕ້ອງການໃຫ້ມີການບັງຄັບໃຊ້ກົດໝາຍຄວບຄຸມການສົ່ງອອກຊິບຢ່າງເຂັ້ມງວດທີ່ສຸດ.

ທີ່ມາ: BBC News

ຂ່າວຕ່າງປະເທດ · 11:04 ໂມງ · ອ່ານ 7 ຄັ້ງ

ລົດໄຟ ແອມແທຣັກ (Amtrak) ຕຳກັບລົດພ່ວງ 18 ລໍ້ ໃນລັດລຸຍເຊຍນາ ສະຫະລັດອາເມຣິກາ ບາດເຈັບ 5 ຄົນ ໂຊກດີອາການບໍ່ຮຸນແຮງ.



ເກີດເຫດລົດໄຟໂດຍສານ Amtrak ເຊິ່ງບັນທຸກຜູ້ໂດຍສານ 95 ຄົນ ຕຳກັບລົດບັນທຸກພ່ວງທີ່ຂົນລົດດັນດິນຢູ່ບໍລິເວນທາງຕັດລົດໄຟ ທາງຕາເວັນອອກຂອງເມືອງລາຟາແຢັດ (Lafayette) ລັດລຸຍເຊຍນາ (Louisiana) ປະເທດສະຫະລັດອາເມຣິກາ ສົ່ງຜົນໃຫ້ລົດໄຟຕົກລາງບາງສ່ວນ ແລະມີຜູ້ບາດເຈັບ 5 ຄົນ.

ວັນອາທິດ ທີ 22 ພະຈິກ 2026 ເວລາປະມານ 18:15 ໂມງ (ເວລາທ້ອງຖິ່ນ) ໄດ້ເກີດອຸບັດຕິເຫດລົດໄຟໂດຍສານ ແອມແທຣັກ (Amtrak) ຕຳກັບລົດບັນທຸກພ່ວງ 18 ລໍ້ ຢູ່ບໍລິເວນທາງຕັດລົດໄຟ ທາງຕາເວັນອອກຂອງເມືອງລາຟາແຢັດ ລັດລຸຍເຊຍນາ ປະເທດສະຫະລັດອາເມຣິກາ ສົ່ງຜົນໃຫ້ຂະບວນລົດໄຟຕົກລາງບາງສ່ວນ ແລະ ມີຜູ້ບາດເຈັບ 5 ຄົນ. ໂດຍນາຍົກເທດສະມົນຕີເມືອງລາຟາແຢັດ ໄດ້ເຜີຍແຜ່ຂໍ້ມູນຜ່ານສື່ສັງຄົມອອນລາຍວ່າ ຜູ້ບາດເຈັບທັງໝົດມີອາການບໍ່ຮຸນແຮງ.

ກົມດັບເພີງເມືອງລາຟາແຢັດ ລະບຸວ່າ ເຫດການດັ່ງກ່າວເກີດຂຶ້ນໃນຕອນແລງວັນອາທິດ ຂະນະທີ່ລົດໄຟທີ່ມີຜູ້ໂດຍສານ 95 ຄົນ ແລ່ນມາຮອດຈຸດເກີດເຫດ ແລະ ໄດ້ຕຳເຂົ້າກັບລົດບັນທຸກພ່ວງທີ່ກຳລັງຂົນອຸປະກອນຂອງລົດດັນດິນ.

ຈ່າສີບຕຳຫຼວດ ແອັດສະລີ ວຸດ (Ashley Wood) ຈາກກົມຕຳຫຼວດເມືອງລາຟາແຢັດ ເປີດເຜີຍວ່າ ໃນເວລາເກີດເຫດ ລົດບັນທຸກກຳລັງແລ່ນຜ່ານບໍລິເວນທາງຕັດລົດໄຟ. ຈາກນັ້ນເຈົ້າໜ້າທີ່ດັບເພີງຈຶ່ງໄດ້ເຂົ້າຊ່ວຍເຫຼືອອົບພະຍົບຜູ້ໂດຍສານອອກຈາກຂະບວນລົດໄຟ ຫຼັງຈາກປະເມີນແລ້ວວ່າມີຄວາມປອດໄພ.

ທີ່ມາ: AP

ຂ່າວຕ່າງປະເທດ · 14:50 ໂມງ · ອ່ານ 6 ຄັ້ງ

ຍີ່ປຸ່ນວາງແຜນທີ່ຈະສ້າງນະຄອນຫຼວງແຫ່ງທີສອງເພື່ອເຮັດໜ້າທີ່ເປັນສູນກາງຮັບມືໄພພິບັດ



ເພື່ອກຽມຮັບມືກັບແຜ່ນດິນໄຫວຄັ້ງໃຫຍ່ ຍີ່ປຸ່ນວາງແຜນທີ່ຈະຂະຫຍາຍສູນບັນຊາການຮັບມືໄພພິບັດໄປຍັງສະຖານທີ່ທີ່ຢູ່ຫ່າງໄກຈາກໂຕກຽວ ໂດຍອາດມີການຈັດຕັ້ງນະຄອນຫຼວງແຫ່ງທີສອງຂຶ້ນມາເຮັດໜ້າທີ່ດັ່ງກ່າວແທນ.

ລັດຖະບານຍີ່ປຸ່ນກຳລັງປັບແຜນປະຕິບັດການໃໝ່ ຫຼັງຈາກເຜີຍແຜ່ການຄາດການຄວາມເສຍຫາຍຫຼ້າສຸດ ສຳລັບສະຖານະການທີ່ເກີດແຜ່ນດິນໄຫວຮຸນແຮງໃຕ້ກຸງໂຕກຽວ ແລະ ພື້ນທີ່ໂດຍຮອບ.

ຈາກການປະເມີນພົບວ່າ ມີໂອກາດປະມານ 70% ທີ່ຈະເກີດແຜ່ນດິນໄຫວຂະໜາດ 7 ຣິກເຕີ ໃຕ້ເຂດມະຫານະຄອນໂຕກຽວພາຍໃນ 30 ປີຂ້າງໜ້າ ຜົນທີ່ຕາມມາອາດຮ້າຍແຮງຫຼາຍ ໂດຍມີຜູ້ຄົນປະມານ 18,000 ຄົນ ສ່ຽງຕໍ່ການເສຍຊີວິດ ເຊິ່ງຄາດວ່າສອງໃນສາມຂອງຜູ້ເສຍຊີວິດຈະເກີດຈາກໄຟໄໝ້.

ສຳນັກຂ່າວເກຍວໂດ ລາຍງານວ່າ ລັດຖະບານຍີ່ປຸ່ນຄາດວ່າຈະສາມາດຮັກສາການດຳເນີນງານຫຼັກໄວ້ໄດ້ ເຖິງແມ່ນວ່າຈະເກີດແຜ່ນດິນໄຫວຄັ້ງໃຫຍ່ໃຕ້ກຸງໂຕກຽວ ຢ່າງໃດກໍຕາມ ລັດຖະບານເຊື່ອວ່າຈຳເປັນຕ້ອງກຽມແຜນສຸກເສີນໄວ້ໃນກໍລະນີທີ່ຄວາມເສຍຫາຍຮຸນແຮງກວ່າທີ່ຄາດການໄວ້.

ດັ່ງນັ້ນ ໃນການແກ້ໄຂແຜນປະຕິບັດການຄັ້ງຕໍ່ໄປ ລັດຖະບານຈະພິຈາລະນາເພີ່ມສະຖານທີ່ທີ່ສາມາດຈັດຕັ້ງສູນບັນຊາການຮັບມືໄພພິບັດໄດ້.

ຕາມແຜນປະຈຸບັນ ຫາກບໍ່ສາມາດຈັດຕັ້ງສູນບັນຊາການທີ່ທຳນຽບລັດຖະບານໃນໂຕກຽວໄດ້ ລັດຖະບານຈະໃຊ້ສະຖານທີ່ສຳຮອງ 3 ແຫ່ງ ໄດ້ແກ່ ອາຄານລັດຖະບານ ເຊິ່ງເປັນທີ່ຕັ້ງຂອງສຳນັກງານຈັດການໄພພິບັດແຫ່ງຊາດ ແລະ ໜ່ວຍງານອື່ນໆອີກຫຼາຍແຫ່ງ, ກະຊວງປ້ອງກັນປະເທດ ແລະ ຖານຮັບມືໄພພິບັດລະດັບພາກພື້ນໃນທາຈິກາວະ (ທາງຕາເວັນຕົກຂອງໂຕກຽວ).

ຮ່າງສະບັບແກ້ໄຂຍັງຄົງສະຖານທີ່ທັງສາມແຫ່ງນີ້ໄວ້ ແຕ່ເນັ້ນຢ້ຳເຖິງຄວາມຈຳເປັນໃນການກຽມພ້ອມສຳລັບທຸກສະຖານະການ ເພື່ອໃຫ້ໝັ້ນໃຈໄດ້ວ່າການດຳເນີນງານຂອງລັດຖະບານຈະບໍ່ຢຸດສະງັກ.

ຄາດວ່າຂະບວນການແກ້ໄຂແຜນຈະດຳເນີນການໃນສອງຂັ້ນຕອນ.

ປະການທຳອິດ ລັດຖະບານຈະພິຈາລະນາເພີ່ມສະຖານທີ່ສຳຮອງນອກເໜືອຈາກສະຖານທີ່ທີ່ມີຢູ່ແລ້ວ 3 ແຫ່ງ ໂດຍອາດລວມເຖິງການຈັດຕັ້ງສູນບັນຊາການຮັບມືໄພພິບັດໃນສະຖານທີ່ພາຍໃນ “ນະຄອນຫຼວງແຫ່ງທີສອງ”.

ຂັ້ນຕອນຕໍ່ໄປແມ່ນການຄັດເລືອກສະຖານທີ່ສຳຮອງ ເມື່ອແຜນການຈັດຕັ້ງ “ນະຄອນຫຼວງແຫ່ງທີສອງ” ເລີ່ມດຳເນີນການ.

ໃນຊ່ວງປາຍເດືອນຕຸລາ ກົດໝາຍຈັດຕັ້ງ “ນະຄອນຫຼວງແຫ່ງທີສອງ” ຂອງຍີ່ປຸ່ນມີຜົນບັງຄັບໃຊ້ຢ່າງເປັນທາງການ ເປີດທາງໃຫ້ທ້ອງຖິ່ນທີ່ມີຄຸນສົມບັດເໝາະສົມສາມາດຍື່ນຂໍການຮັບຮອງໄດ້.

ນະຄອນຫຼວງແຫ່ງທີສອງນີ້ຈະເຮັດໜ້າທີ່ເປັນສູນສຳຮອງ ເພື່ອໃຫ້ໝັ້ນໃຈໄດ້ວ່າການເຮັດວຽກຫຼັກຂອງໂຕກຽວຈະດຳເນີນຕໍ່ໄປໄດ້ໃນກໍລະນີສຸກເສີນ ຂະນະດຽວກັນກໍມີສ່ວນຊ່ວຍໃນການກະຈາຍອຳນາດທາງເສດຖະກິດນຳ.

ທີ່ມາ: ແທນເຍີນ (Thanh Nien)

ຂ່າວຕ່າງປະເທດ · 14:10 ໂມງ · ອ່ານ 6 ຄັ້ງ

NATO ສັ່ງສົ່ງເຮືອບິນເຕືອນໄພ AWACS ປະຈຳການທີ່ໂປແລນດ່ວນ! ຫຼັງຂີປະນາວຸດຣັດເຊຍ 3 ລູກຕົກໃສ່ດິນແດນ



ອົງການສົນທິສັນຍາອັດລັງຕິກເໜືອ (NATO) ໄດ້ອະນຸມັດສົ່ງເຮືອບິນແຈ້ງເຕືອນໄພ ແລະ ຄວບຄຸມທາງອາກາດ (AWACS) ໄປປະຈຳການຢູ່ປະເທດໂປແລນຢ່າງເລັ່ງດ່ວນ ເພື່ອຍົກລະດັບການເຝົ້າລະວັງ ແລະ ປ້ອງກັນນ່ານຟ້າ ຫຼັງຈາກເກີດເຫດຂີປະນາວຸດຂອງຣັດເຊຍ 3 ລູກລ່ວງລ້ຳເຂົ້າໄປຕົກໃນດິນແດນຂອງໂປແລນເມື່ອບໍ່ດົນມານີ້.

ເບື້ອງຫຼັງເຫດການລະທຶກຂວັນ

ຕາມການລາຍງານຂອງສຳນັກຂ່າວ Bloomberg ແລະ Al Jazeera ລະບຸວ່າ ເຫດການດັ່ງກ່າວເກີດຂຶ້ນໃນວັນທີ 20 ພະຈິກ 2026 ໃນລະຫວ່າງທີ່ກອງທັບຣັດເຊຍລະດົມໂຈມຕີທາງອາກາດຄັ້ງໃຫຍ່ໃສ່ຢູເຄຣນ ໂດຍໄດ້ມີ ຂີປະນາວຸດຮ່ອນ Kh-101 ຂອງຣັດເຊຍ ຈຳນວນ 3 ລູກ ບິນລ່ວງລ້ຳນ່ານຟ້າ ແລະ ຕົກລົງໃນພື້ນທີ່ທາງຕາເວັນອອກສ່ຽງໃຕ້ຂອງໂປແລນ (ບໍລິເວນໝູ່ບ້ານ Nowy Lipowiec, Rudnik nad Sanem ແລະ Molodycz). ເຖິງແມ່ນວ່າຈະບໍ່ມີລາຍງານຜູ້ບາດເຈັບ ຫຼື ເສຍຊີວິດ ແຕ່ກໍສ້າງຄວາມຕຶງຄຽດຢ່າງໜັກໃນພາກພື້ນ.

ໂປແລນປະນາມ "ການຈົງໃຈຍົວະຍຸ"

ສິ່ງທີ່ໜ້າກັງວົນທີ່ສຸດກໍຄື ຈຸດທີ່ຂີປະນາວຸດລູກໜຶ່ງຕົກລົງນັ້ນ ຢູ່ຫ່າງຈາກພື້ນທີ່ທີ່ກອງກຳລັງທະຫານຈາກ 11 ປະເທດໃນຢູໂຣບກຳລັງຊ້ອມຮົບຮ່ວມກັນ ພຽງປະມານ 35 ກິໂລແມັດເທົ່ານັ້ນ. ດ້ານທ່ານ ໂດນັລ ທັສກ໌ (Donald Tusk) ນາຍົກລັດຖະມົນຕີໂປແລນ ໄດ້ອອກມາປະນາມເຫດການນີ້ຢ່າງຮຸນແຮງ ວ່າ ເປັນ "ການຈົງໃຈຍົວະຍຸ" ຈາກຝ່າຍຣັດເຊຍ.

ການຕອບໂຕ້ຂອງ NATO

ຫຼັງຈາກເກີດເຫດ ສະພາແອັດແລນຕິກເໜືອ (North Atlantic Council) ໄດ້ເປີດກອງປະຊຸມດ່ວນທີ່ນະຄອນຫຼວງບຣັສເຊລສ໌ ໃນວັນທີ 23 ພະຈິກ 2026 ກ່ອນທີ່ຜູ້ບັນຊາການສູງສຸດຝ່າຍພັນທະມິດຢູໂຣບ (SACEUR) ຈະອະນຸມັດສົ່ງເຮືອບິນ

ຕໍ່ໜ້າ 16

NATO ສັງສົງເຮືອບິນເຕືອນໄພ AWACS ປະຈຳການທີ່ໂປແລນ... (ຕໍ່ຈາກໜ້າ 15)

AWACS ໄປປະຈຳການສ່ວນໜ້າທີ່ໂປແລນທັນທີ ເພື່ອເພີ່ມປະສິດທິພາບໃນການກວດຈັບເຮດາ ແລະ ແຈ້ງເຕືອນໄພທາງອາກາດໃຫ້ແກ່ໂປແລນ ລວມເຖິງພື້ນທີ່ຊາຍແດນດ້ານຕາເວັນອອກຂອງກຸ່ມປະເທດ NATO.

ທີ່ມາ: Bloomberg, Al Jazeera, Anadolu Agency

◆ ຂ່າວຕ່າງປະເທດ · 09:18 ໂມງ · ອ່ານ 6 ຄັ້ງ

ຊາວເບວຢຽມນັບໝື່ນຄົນແຫ່ປະທ້ວງມາດຕະການຮັດເຂັມຂັດ ຕຳຫຼວດສີດນ້ຳແຮງດັນສູງສະຫຼາຍມ້ອບ



ຊາວເບວຢຽມຫຼາຍໝື່ນຄົນຊຸມນຸມຕໍ່ຕ້ານແຜນຫຼຸດລາຍຈ່າຍພາກລັດທີ່ອາດປະຢັດງົບໄດ້ 1 ໝື່ນລ້ານເອີໂຣ ຂະນະທີ່ນາຍົກລັດຖະມົນຕີເຕືອນລັດຖະບານປະສົມອາດລົ້ມ ຫາກຕົກລົງງົບປະມານປີໜ້າບໍ່ໄດ້ກ່ອນສິ້ນປີ

ວັນທີ 23 ພະຈິກ 2569 ສຳນັກຂ່າວຕ່າງປະເທດ ລາຍງານວ່າ ຊາວເບວຢຽມຫຼາຍໝື່ນຄົນລວມຕົວເດີນຂະບວນປະທ້ວງໃນນະຄອນຫຼວງບຣັສເຊີລ ເພື່ອຕໍ່ຕ້ານມາດຕະການຮັດເຂັມຂັດຂອງລັດຖະບານທີ່ກຽມຫຼຸດລາຍຈ່າຍພາກລັດ ໂດຍຜູ້ຊຸມນຸມກັງວົນວ່າແຜນປະຢັດງົບປະມານປະມານ 10,000 ລ້ານເອີໂຣ ຫຼື ປະມານ 370,000 ລ້ານບາດ ຈະສ້າງພາລະໃຫ້ປະຊາຊົນຫຼາຍຂຶ້ນທ່າມກາງຄ່າຄອງຊີບທີ່ສູງຂຶ້ນ ແລະ ກຳລັງຊື້ທີ່ຫຼຸດລົງ.

ລາຍງານຂ່າວລະບຸວ່າ ລະຫວ່າງການຊຸມນຸມເກີດການປະເຊີນໜ້າລະຫວ່າງຜູ້ປະທ້ວງກັບຕຳຫຼວດ ໂດຍເຈົ້າໜ້າທີ່ໃຊ້ລະເບີດຄວັນ ແລະ ລົດສີດນ້ຳແຮງດັນສູງເຂົ້າສະຫຼາຍການຊຸມນຸມ ລວມເຖິງສີດນ້ຳດັບໄຟທີ່ເກີດຂຶ້ນຕາມທ້ອງຖະໜົນ ຂະນະທີ່ຜູ້ຊຸມນຸມສະແດງຄວາມບໍ່ພໍໃຈຕໍ່ຄ່າພະລັງງານ ແລະ ຄ່າເຮັດຄວາມຮ້ອນທີ່ເພີ່ມສູງຂຶ້ນ ລວມເຖິງພາວະເງີນເຟີ້ທີ່ກະທົບຕໍ່ຊີວິດປະຈຳວັນ.

ໂດຍການປະທ້ວງເກີດຂຶ້ນໃນຊ່ວງທີ່ລັດຖະບານປະສົມຂອງເບວຢຽມກຳລັງປະເຊີນຄວາມຫຍຸ້ງຍາກໃນການເຈລະຈາຈັດທຳງົບປະມານປີໜ້າ ເຊິ່ງທາງ ບາຣ້ຕເດີ ເວເວີ ນາຍົກລັດຖະມົນຕີເບວຢຽມປະກາດກຳນົດເສັ້ນຕາຍໃໝ່ໃຫ້ພັກຮ່ວມລັດຖະບານຕ້ອງບັນລຸຂໍ້ຕົກລົງຫຼຸດລາຍຈ່າຍພາຍໃນສິ້ນປີນີ້ ບໍ່ດັ່ງນັ້ນ ລັດຖະບານອາດເຖິງຂັ້ນລົ້ມສະຫຼາຍ ທາງສຳນັກງານນາຍົກລັດຖະມົນຕີລະບຸວ່າທ່ານ ເດີ ເວເວີ ຈະເອີ້ນພັກຮ່ວມລັດຖະບານມາຫາລືເພື່ອຫາທາງອອກຫຼັງຈາກສົມເດັດພະລາຊາທິບໍດີ ຟີລິບແຫ່ງເບວຢຽມ ພະລາຊະທານເວລາເພີ່ມເຕີມໃຫ້ທ່ານໃນການເຈລະຈາຈັດທຳງົບປະມານ.

ທັງນີ້ ນາຍົກລັດຖະມົນຕີເຕືອນວ່າ ຫາກຍັງບໍ່ສາມາດບັນລຸຂໍ້ຕົກລົງໄດ້ກ່ອນ ວັນທີ 1 ມັງກອນ ເຊິ່ງເປັນວັນທີ່ຈະເລີ່ມໃຊ້ມາດຕະການງົບປະມານຊົ່ວຄາວ ລັດຖະບານກໍຈະບໍ່ສາມາດບໍລິຫານປະເທດໄດ້ໃນທາງປະຕິບັດ ແລະ ຈະສົ່ງຜົນໃຫ້ລັດຖະບານສິ້ນສຸດລົງ.

◆ ຂ່າວຕ່າງປະເທດ · 15:30 ໂມງ · ອ່ານ 5 ຄັ້ງ

ລັດຖະມົນຕີວ່າການກະຊວງປ້ອງກັນປະເທດສະຫະລັດ ຍັງບໍ່ທັນອະນຸມັດການສົ່ງມອບລູກສອນໄຟແພັດທຣີອອດໃຫ້ແກ່ຢູເຄຣນ



ເມື່ອວັນທີ 24 ພະຈິກ ໜັງສືພິມ ໄຟແນນຊຽວ ໄທມສ້ (Financial Times) ລາຍງານວ່າ ປີເຕີ ເຮັກເຊດ ລັດຖະມົນຕີວ່າການກະຊວງສົງຄາມຂອງສະຫະລັດ ຍັງບໍ່ທັນອະນຸມັດການສົ່ງມອບລູກສອນໄຟສະກັດກັ້ນທາງອາກາດແພັດທຣີອອດ (Patriot) ປະມານ 60 ລູກໃຫ້ແກ່ຢູເຄຣນ ເຖິງແມ່ນວ່າວໍຊິງຕັນຈະຕົກລົງທີ່ຈະຈັດຫາອາວຸດເຫຼົ່ານີ້ໄປກ່ອນໜ້ານີ້ແລ້ວກໍຕາມ.

ໃນສ່ວນຂອງ ຢູເຄຣນນັ້ນ ໄດ້ຖະແຫຼງຊ້ຳແລ້ວຊ້ຳອີກວ່າ ຕົນຕ້ອງການລູກສອນໄຟສະກັດກັ້ນເພີ່ມເຕີມຢ່າງຮີບດ່ວນ ເພື່ອຮັບມືກັບການໂຈມຕີທີ່ເພີ່ມຫຼາຍຂຶ້ນຈາກລູກສອນໄຟ ແລະ ອາກາດຍານບໍ່ມີຄົນຂັບ (UAV) ຂອງຣັດເຊຍ.

ກະຊວງປ້ອງກັນປະເທດສະຫະລັດ ຍັງບໍ່ທັນອອກຖະແຫຼງການໃດໆ.

ຈາກລາຍງານຂອງ Financial Times ລູກສອນໄຟທີ່ຍັງບໍ່ທັນໄດ້ຮັບການອະນຸມັດໃຫ້ສົ່ງມອບນັ້ນ ລວມເຖິງລູກສອນໄຟສະກັດກັ້ນ PAC-3 ເຊິ່ງມີກຳນົດສົ່ງມອບລະຫວ່າງເດືອນກັນຍາເຖິງທັນວາ 2026.

ຢ່າງໃດກໍຕາມ ຈົນເຖິງປະຈຸບັນ ຍັງບໍ່ມີການອະນຸມັດໃຫ້ຈັດສົ່ງສິນຄ້າເຫຼົ່ານີ້ເລີຍແມ້ແຕ່ລາຍການດຽວ.

ນອກຈາກນີ້ ຍັງມີການຈັດສັນລູກສອນໄຟ PAC-2 ເຊິ່ງເປັນລຸ້ນເກົ່າກວ່າຂອງລະບົບລູກສອນໄຟແພັດທຣີອອດ ໃຫ້ກັບຢູເຄຣນອີກປະມານ 20 ລູກ ແຕ່ຍັງຢູ່ລະຫວ່າງລໍຖ້າການອະນຸມັດການສົ່ງມອບ.

ໂດຍສະເພາະຢ່າງຍິ່ງ ຕາມລາຍງານຂອງ Financial Times ແຜນການຂອງຢູເຄຣນທີ່ຈະຂໍອະນຸຍາດຈາກສະຫະລັດ ເພື່ອຜະລິດລູກສອນໄຟສະກັດກັ້ນ Patriot ດ້ວຍຕົນເອງນັ້ນ ຂະນະນີ້ຕິດຂັດຢູ່ທີ່ກະຊວງປ້ອງກັນປະເທດສະຫະລັດ.

ໜັງສືພິມສະບັບໜຶ່ງອ້າງຄຳເວົ້າຂອງເຈົ້າໜ້າທີ່ກະຊວງປ້ອງກັນປະເທດສະຫະລັດ ວ່າ “ສະຫະລັດໄດ້ດຳເນີນຄວາມພະຍາຍາມຫຼາຍດ້ານພ້ອມກັນ ເພື່ອເລັ່ງຄວາມຮ່ວມມືທາງອຸດສາຫະກຳຂ້າມມະຫາສະໝຸດແອັດແລນຕິກກັບພັນທະມິດໃນເອີຣົບ ແລະ ຢູເຄຣນ ໃນດ້ານລະບົບປ້ອງກັນໄພທາງອາກາດ ແລະ ລະບົບປ້ອງກັນລູກສອນໄຟແພັດທຣີອອດ ວຽກນີ້ຍັງຄົງດຳເນີນຕໍ່ໄປ”.

ເມື່ອເດືອນທີ່ແລ້ວ ສະຫະລັດອະນຸມັດການຂາຍລູກສອນໄຟ Patriot PAC-3 ຈຳນວນ 500 ລູກໃຫ້ແກ່ຢູເຄຣນ ມູນຄ່າປະມານ 2.1 ຕື້ໂດລາ ຢ່າງໃດກໍຕາມ ຄາດວ່າຈະເລີ່ມສົ່ງມອບໄດ້ໃນຊ່ວງຕົ້ນທົດສະວັດ 2030.

ທີ່ມາ: UNN

ຂ່າວຕ່າງປະເທດ · 04:34 ໂມງ · ອ່ານ 5 ຄັ້ງ

ທ່ານ ສີ ຈິ້ນຜິງ ໄດ້ຊີ້ທິດທາງທີ່ຖືກຕ້ອງໃຫ້ແກ່ການຮ່ວມມືໃນອາຊີ-ປາຊີຟິກ



ວິທະຍຸ ໂທລະພາບສູນກາງຈີນ, ຄຳປາໄສສຳຄັນ ຂອງ ທ່ານ ສີ ຈິ້ນຜິງ ປະທານປະເທດຈີນທີ່ກ່າວ ໃນກອງ ປະຊຸມ ສຸດຍອດ ອຸດສາຫະກຳການຄ້າ ອົງການຮ່ວມມື ເສດຖະກິດ ອາຊີ-ປາຊີຟິກຫລື APEC ແລະ ກອງປະຊຸມ ບໍ່ເປັນທາງການ ຂອງຜູ້ນຳ APEC ໄດ້ຊີ້ທິດທາງທີ່ຖືກຕ້ອງ ໃຫ້ແກ່ ການຮ່ວມມື ໃນອາຊີ-ປາຊີຟິກ, ຈະຊຸກຍູ້ການສ້າງ ປະຊາຄົມອາຊີ-ປາຊີຟິກ ໃຫ້ເລິກເຊິ່ງກວ່າເກົ່າ ແລະເປັນ ຮູບປະທຳກວ່າເກົ່າ. ທ່ານ ນາງ ນິໂກ ອອງເຈົ້າໜ້າທີ່ພິເສດ ຂອງຮອງນາຍົກລັດຖະມົນຕີ ມາເລເຊຍ ໄດ້ກ່າວວ່າ:ສິ່ງທີ່ ເຮັດໃຫ້ ຂ້າພະເຈົ້າປະທັບໃຈທີ່ສຸດ ຄືວິໄສທັດອັນມະ ໂຫລານ ກ່ຽວກັບ ການສ້າງປະຊາຄົມອາຊີ-ປາຊີຟິກ ທີ່ສະ ເໜີໂດຍ ທ່ານສີ ຈິ້ນຜິງ. ທ່ານ ສີ ຈິ້ນຜິງ ໄດ້ສະເໜີ ໃຫ້ ຮ່ວມກັນສ້າງ “4 ຂໍ້ 8 ເລື່ອ” ຂອງປະຊາຄົມ ອາຊີ-ປາຊີ ຟິກ ແມ່ນແຜນການທີ່ເປັນລະບົບ, ຈະທັນວິໄສທັດ ແຫ່ງ ປະຊາຄົມ ອາຊີ-ປາຊີຟິກ ໃຫ້ກາຍ ເປັນການກະທຳຕົວຈິງ ໃນພາກພື້ນ. ທ່ານ ປິຕິ ສີແສງນາມຫົວໜ້າສູນຄົ້ນຄວ້າ ເສ ດຖະກິດສາກົນ ມະຫາວິທະຍາໄລ ຈຸລາ ລົງກອນໄທກ່າວວ່າ: ກອງປະຊຸມບໍ່ເປັນ ທາງການຂອງຜູ້ນຳ APEC ພ້ອມດ້ວຍ ກິດຈະກຳຕ່າງໆທີ່ກ່ຽວຂ້ອງລວມທັງການ ພົບປະຄັ້ງທຳອິດ ລະຫວ່າງ ປະມຸກລັດ ຂອງ ສປ ຈີນ-ລັເຊຍ-ສ.ອາເມລິກາ, ສາ ມາດເວົ້າໄດ້ວ່າແມ່ນຂີດໝາຍສຳຄັນ ຂອງ ສາຍພົວພັນສາກົນ ໃນສະຕະວັດທີ 21, ສປ ຈີນ ພວມເສີມຂະຫຍາຍບົດບາດ ນຳ ພາທີ່ມີລັກສະນະສ້າງສັ.ພວກເຮົາ ເຊື່ອ ໝັ້ນວ່າ:ພາຍໃຕ້ ສະພາບການ ທີ່ມີຄວາມ ຂັດແຍ້ງ ແລະການປະທະກັນຕ່າງໆປະປົນ ກັນ, ການຊຸກ ຍູ້ການພັດທະນາ ຂອງເສດ ຖະກິດແລະຍົກສູງລະດັບຊີວິດ ການເປັນ ຢູ່ ຂອງປະຊາຊົນ ຈຶ່ງແມ່ນເລື່ອງ ທີ່ສຳຄັນ ທີ່ສຸດ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 13:29 ໂມງ · ອ່ານ 4 ຄັ້ງ

ມາເລເຊຍ ເດີນໜ້າສົ່ງກັບພົນລະເມືອງມຽນມາ ກວ່າ 6,800 ຄົນ ໃນເດືອນທັນວານີ້ ທ່າມກາງສຽງວິພາກວິຈານດ້ານສິດທິ ມະນຸດ



ນາຍົກລັດຖະມົນຕີມາເລເຊຍເປີດເຜີຍ ກຽມສົ່ງ ຊາວມຽນມາຫຼາຍກວ່າ 6,800 ຄົນກັບປະເທດໃນເດືອນ ທັນວາ ແບ່ງເປັນການເດີນທາງດ້ວຍເຮືອ 1,500 ຄົນ ແລະ ເຮືອບິນອີກຫຼາຍກວ່າ 5,300 ຄົນ ໂດຍ ລັດຖະບານມຽນມາເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍ.

ວັນທີ 24 ພະຈິກ 2569 ສຳນັກຂ່າວຕ່າງປະເທດ ລາຍງານວ່າ ທ່ານ ອັນວາ ອິບຣາຮິມ ນາຍົກລັດຖະມົນຕີ ມາເລເຊຍ ເປີດເຜີຍຕໍ່ລັດຖະສະພາວ່າ ລັດຖະບານກຽມ ສົ່ງຊາວມຽນມາຫຼາຍກວ່າ 6,800 ຄົນກັບປະເທດໃນ ເດືອນທັນວານີ້ ໂດຍຈະໃຊ້ທັງເຮືອ ແລະ ເຮືອບິນໃນການ ດຳເນີນການ.

ທ່ານ ອັນວາ ລະບຸວ່າ ລັດຖະມົນຕີວ່າການກະຊວງ ການຕ່າງປະເທດໄດ້ອະນຸມັດໃຫ້ໃຊ້ເຮືອຂອງກອງທັບເຮືອ 3 ລຳ ເພື່ອຮັບຊາວມຽນມາ 1,500 ຄົນກັບປະເທດໃນ ວັນທີ 6 ແລະ 7 ທັນວານີ້.

ນອກຈາກນີ້ ໃນເດືອນທັນວາຈະມີຊາວມຽນມາ ອີກ 5,303 ຄົນເດີນທາງກັບດ້ວຍ ເຮືອບິນ ໂດຍລັດຖະບານມຽນມາຈະເປັນ ຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

ທີ່ມາ: AFP

ຂ່າວຕ່າງປະເທດ · 21:56 ໂມງ · ອ່ານ 3 ຄັ້ງ

ສສ ຫວຽດນາມ ຈັດພິທີສະເຫລີມສະຫລອງ 80 ປີ ແຫ່ງວັນກອງປະຊຸມ ວັດທະນະທຳ ທົ່ວປະເທດ ຄັ້ງທີ 1



ວິທະຍຸກະຈ່າຍສຽງຫວຽດນາມ, ຄະນະບໍລິຫານງາ ນ ສູນກາງພັກ ກອມມູນິດ ຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ສສ.ຫວຽດນາມ, ຄະນະ ກຳມະການສູນກາງແນວໂຮມ ປະເທດຊາດ ຫວຽດນາມ ໄດ້ເປັນກຽດ ຈັດຕັ້ງພິທີສະເຫລີມ ສະຫລອງ 80 ປີ ແຫ່ງ ວັນ ດຳເນີນກອງປະຊຸມ ວັດທະນະທຳ ທົ່ວປະເທດຄັ້ງທີ 1 (24/11/1946 – 24/11/2026). ໃນໂອກາດນີ້ ທ່ານ ໂຕເລີມ, ເລຂາທິການໃຫຍ່, ປະທານປະເທດ ຫວຽດນາມ ຊີ້ແຈ້ງວ່າ: ວັນທີ 24 ພະຈິກ 1946, ຢູ່ໂຮງ ລະຄອນໃຫຍ່ຮ່າໂນ້ຍ, ທ່ານ ປະທານ ໂຮ່ຈິມິນໄດ້ເຂົ້າ ຮ່ວມ ແລະກ່າວຄຳເຫັນ ໄຂກອງປະຊຸມ ວັດທະນະທຳ ທົ່ວປະເທດ ຄັ້ງທີ 1. ກອງປະຊຸມ ສືບທອດຈິດໃຈ ໂຄງ ຮ່າງວັດທະນະທຳ ຫວຽດນາມ ປີ 1943 ດ້ວຍສາມຫລັກ ການ ຊົນຊາດ, ວິທະຍາສາດ, ມະຫາຊົນ, ຕັ້ງວັດທະນະທຳ ເຂົ້າໃນການພົວພັນ ຢ່າງສະໜິດແໜ້ນກັບ ພາລະກຳ ຂອງ ປະເທດຊາດແລະ ຄວາມຜາສຸກ ຂອງປະຊາຊົນ. ທ່ານ ໃຫ້ຮູ້ວ່າ: ຢູ່ກອງປະຊຸມ, ປະທານ ໂຮ່ຈິ ມິນ ໄດ້ຢັ້ງຢືນວ່າ:ວັດທະນະທຳ ຕ້ອງສ່ອງ ແສງເຍືອງທາງ ໃຫ້ແກ່ ປະຊາຊົນກ້າວ ເດີນ”. ເພີ່ນຖືຄວາມຜາສຸກ ຂອງປະຊາ ຊົນ ເປັນພື້ນຖານໃຫ້ວັດທະນະທຳໃໝ່, ຍົກສູງສະຕິ ເປັນເຈົ້າຕົນເອງ, ຕັກເຕືອນ ພວກເຮົາຮໍ່າຮຽນ ສິ່ງທີ່ດີງາມຂອງໂລກ, ດັດປັບຄວາມລົ້ງເຄີຍທີ່ບໍ່ດີ ໃນສັງຄົມ ແລະເບິ່ງແຍງດູແລລຸ້ນໜຸ່ມ.ການເບິ່ງແຍງ ດູແລ ວັດທະນະທຳ ແມ່ນເຕົ້າໂຮມຈິດໃຈ ຄົນ, ຫັນນ້ຳໃຈຮັກຊາດ ຂອງປະຊາຊົນແຕ່ ລະຄົນກາຍເປັນກຳລັງແຮງ ແຫ່ງການກະ ທຳ ທີ່ມີເປັນເອກະພາບ ຂອງທົ່ວທັງ ຊາດ.ບົດຮຽນນີ້ຍັງມີຄຸນຄ່າເໝືອນເດີມ ມາຮອດປັດຈຸບັນ. ໃນສັງກາດ ພັດທະນາ ໃໝ່, ມະຕິເລກທີ 80 ຂອງກົມການ ເມືອງ ແລະມະຕິເລກທີ 28 ຂອງສະພາ ແຫ່ງຊາດ ໄດ້ກຳນົດບັນດາແຜນນະໂຍ ບາຍ, ນະໂຍບາຍພັດທະນາ ວັດທະນະ ທຳ.ສິ່ງສຳຄັນທີ່ສຸດ ແມ່ນນຳບັນດານະໂຍ ບາຍ ຊີ້ຂາດ ເຂົ້າຊີວິດຕົວຈິງ, ເສີມຂະຫ ຍາຍບົດບາດ ຂອງວັດທະນະທຳ ໃນການ ກຳນົດທິດທາງ ພັດທະນາ ປະເທດຊາດ, ການເຕີບໂຕ ເສດຖະກິດ ຕ້ອງຕິດພັນກັບ ຄຸນນະພາບ ການດຳລົງຊີວິດແລະ ການພັດ ທະນາ ຢ່າງຮອບດ້ານຂອງມະນຸດ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ໂຄສະນາ


EMERGING DIGITAL SOLUTIONS
ແນວຄິດ → ອອກແບບ → ເປີດໃຊ້ງານ
ຮັບອອກແບບ ແລະ ພັດທະນາ ເວັບໄຊທ์ · ແອັບ · ລະບົບທຸລະກິດ
ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ
ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້
ອໍເດີໃໝ່ #1024 ຈາກແອັບ
app.huanlao.la/dashboard
ຮ ເຮືອນລາວ
ພາບລວມ
ອໍເດີ
ເມນູ
ລູກຄ້າ
ລາຍງານ
ສ້າງຮ້ານຄ້າ
ພາບລວມມື້ນີ້
25 ຕ.ລ. 2026
+ ເພີ່ມເມນູ
ຍອດຂາຍມື້ນີ້
₭ 4.250.000
▲ 12% ຈາກມື້ວານ
ອໍເດີ
86
ຈາກແອັບ 54 · ໜ້າຮ້ານ 32
ລູກຄ້າໃໝ່
12
ຍອດຂາຍ 7 ມື້
ກີບ
ສະບາຍດີ, ແກ້ວ
ມື້ນີ້ກິນຫຍັງດີ?
ຊອກຫາເມນູ
ທັງໝົດ
ເຝີ
ລາບ
ເຄື່ອງດື່ມ
ເຝີງົວພິເສດ
₭ 45.000
ລາບໄກ່
₭ 40.000
ຕຳໝາກຮຸ່ງ
₭ 25.000
ກະຕ່າ · 2 ລາຍການ
₭ 90.000
ສັ່ງເລີຍ
ຢາກມີລະບົບ ເປັນຂອງ ຕົວເອງບໍ? ເຮົາສ້າງໃຫ້
ສິ່ງທີ່ພວກເຮົາສ້າງໃຫ້ທ່ານ
ເວັບໄຊທ์ທຸລະກິດ
ເວັບແອັບ
ແອັບມືຖື
ຮ້ານຄ້າອອນລາຍ
ລະບົບ CRM
ລະບົບ ERP
ປລັກອິນ & API
ໂຊລູຊັນ AI
ຕິດຕໍ່ໄດ້ເລີຍ, ໃຫ້ຄຳປຶກສາຟຣີ
020 58886182
ສະແກນ QR ເພື່ອແຊັດ WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 12/11/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 37,360**	**▼ 32,330**	**▼ 32,400**
ແຂວງວຽງຈັນ	▼ 37,360	▼ 32,330	▼ 32,400
ຜົ້ງສາລີ	▼ 38,350	▼ 33,320	▼ 33,390
ຫຼວງນ້ຳທາ	▼ 37,850	▼ 32,830	▼ 32,890
ອຸດົມໄຊ	▼ 38,030	▼ 33,000	▼ 33,070
ບໍ່ແກ້ວ	▼ 37,460	▼ 32,430	▼ 32,500
ຫຼວງພະບາງ	▼ 37,870	▼ 32,840	▼ 32,910
ຫົວພັນ	▼ 37,870	▼ 32,840	▼ 32,910
ໄຊຍະບູລີ	▼ 37,680	▼ 32,660	▼ 32,730
ຊຽງຂວາງ	▼ 37,560	▼ 32,520	▼ 32,590
ໄຊສົມບຸນ	▼ 37,780	▼ 32,750	▼ 32,830
ບໍລິຄຳໄຊ	▼ 37,410	▼ 32,380	▼ 32,450
ຄຳມ່ວນ	▼ 37,390	▼ 32,360	▼ 32,430
ສະຫວັນນະເຂດ	▼ 37,390	▼ 32,360	▼ 32,430
ສາລະວັນ	▼ 37,640	▼ 32,620	▼ 32,690
ເຊກອງ	▼ 37,640	▼ 32,610	▼ 32,690
ຈຳປາສັກ	▼ 37,420	▼ 32,390	▼ 32,460
ອັດຕະປື	▼ 37,690	▼ 32,660	▼ 32,730

ແຫຼ່ງ: ລາຍງານລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (22/10)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

02/12		ວັນສະຖາປະນາ ສປປ ລາວ · ວັນພຣະ
09/12		ວັນພຣະ
10/12		ເດືອນຈຽງ
13/12		ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 24/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▲ 22,344	▲ 22,684
THB ບາດ ໄທ	▼ 665.71	▼ 679.00
CNY ຢວນ ຈີນ	▲ 3,342	▲ 3,408
EUR ເອີໂຣ	▼ 24,386	▼ 24,871
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▲ 139.83	▲ 142.61
SGD ໂດລາ ສິງກະໂປ	▲ 16,984	▲ 17,656
GBP ປອນ ອັງກິດ	▼ 29,093	▼ 29,671

ສະເລ່ຍທະນາຄານ (ທຫລ): USD ຊື້ 22,460 · ຂາຍ 22,683 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳແທ່ງ 1 ບາດ

40,350,000

▼ 520,000

ຄຳແທ່ງ 99.99% · 1 ກຣາມ

—

ອັບເດດ 25/11 05:15 · mahaxan.com/today/gold

ຫວຍພັດທະນາ

ງວດ 203

ອອກວັນທີ 24/11/2026

230179

ງວດ 202 · 23/11	575791
ງວດ 201 · 20/11	603947
ງວດ 200 · 19/11	928727
ງວດ 199 · 18/11	265341

ພະຍາກອນອາກາດ

ວັນພຸດ 25 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	19.0–27.5°C	ແຈ່ມໃສ
ຫຼວງພະບາງ	18.4–24.7°C	ເມກບາງສ່ວນ
ໂພນສະຫວັນ	13.2–22.9°C	ມີຝົນ
ຊຳເໜືອ	11.7–20.9°C	ມີຝົນ
ສະຫວັນນະເຂດ	19.6–29.8°C	ເມກບາງສ່ວນ
ປາກເຊ	21.8–30.4°C	ເມກບາງສ່ວນ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ແຈ້ງການ

ແຈ້ງການມອດໄຟ ວັນທີ 26,27,29/11/2026



ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ລັດວິສາຫະກິດໄຟຟ້າລາວ
ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ
ສາຂານະຄອນຫຼວງວຽງຈັນ 1

ເລກທີ ຜ.ຄ/ສ.ນ.ຄ.ນ.ວ 1
ນະຄອນຫຼວງວຽງຈັນ, ວັນທີ 24 NOV 2026

ແຈ້ງການມອດໄຟ

ເຖິງ: ຜູ້ຊົມໃຊ້ໄຟຟ້າ, ເພື່ອຮຽນ ບໍລິສັດ ລັດວິສາຫະກິດໄຟຟ້າລາວ, ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ, ສາຂານະຄອນຫຼວງວຽງຈັນ 1, ຈະໄດ້ມອດໄຟເພື່ອເຂົ້າຈຸກຕາມຄຸ້ມບ້ານ, ໂຮງຈັກ, ໂຮງງານ, ສຳນັກງານຫ້ອງການຂອງລັດ ແລະ ເອກະຊົນເພື່ອຍັບຍັ້ງ.

ເລື່ອງ: ຍົກມອດໄຟ 22 kV ສາຍແຈກ MSS 2.2 ສະຖານີໄຟຟ້າສີສະຫວາດ.

- ອີງໃສ່ໃບກິດລ່ຳພັນ ສະບັບເລກທີ 2674/ປຄລກ. ນວ1.ຄລຍ ລົງວັນທີ 18/11/2026

ສາຂານະຄອນຫຼວງວຽງຈັນ 1, ຂໍຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າຊາບວ່າ ໃນວັນທີ 26/11/2026 ເວລາ 09:00 - 12:00 ໂມງ, (ລວມເວລາ 3 ຊົ່ວໂມງ) ຈະໄດ້ມອດໄຟໃຫ້ບໍລິສັດ ຕິດຕັ້ງສ້ອມແປງລະບົບໄຟຟ້າເພື່ອປະຕິບັດວຽກ ຕໍ່ກອນເຊ້ຍ, ເສົາຈຸດເຊື່ອມແລວ ແລະ ປະກອບແຊນ 22 kV ໃນຍ້ຽຂດບ້ານ ມີໃຊ ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ. ມອດປິດ Hotline Clamp ຫາ ແລວໄຟຊຸດ. ລາຍລະອຽດເຂດທີ່ມີການມອດໄຟມີດັ່ງລຸ່ມນີ້:

1. ບ້ານ ມີໃຊ
2. ບ້ອຍ ມີນ້ຳກາ
3. ໂຮງແຮມອາລຸນ
4. ຮ້ານສະດົກເກີ ຟ້ຽກເຄ
5. FULL MOON Café
6. ຮ້ານ Fuji
7. ໝໍ່ແຫ່ງສ້ອນໄກ 3 ໝໍ້
8. ເຮືອນໝໍ່ແມ່ປະຊາຊົນໂຮງແຮມ, ບ້ານພັກ, ອາພັດເມັ້ນ, ແລະ ຫ້ຳງຮ້ານອາຫານ ຕ່ຳງງໍ່ມີເວນຕ້ຳກ່ອ.

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າເພື່ອຊັບຊາບຫາວິທີກະກຽມ ແລະ ສ້ຳງຮ່ວ້ອນໃຫ້ດ້ວຍດີ ລ່ວງໜ້ຳຢ່ຳງໍ່ເຖິງກັນ ແລະ ຂໍອະໄພໃນຄວາມບໍ່ສະດວກຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົ້ຳລົບຖ້ຽຢ່ຳງສູງ.
ຫົວໜ້ຳສາຂານະຄອນຫຼວງວຽງຈັນ 1
ທ້າວ ນ້ຳລັກ ທ້ອງສະຫວັນ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 19 ໃນສະບັບນີ້

ກິລາ · 16:01 ໂມງ · ອ່ານ 7 ຄັ້ງ

ຜົນການແຂ່ງຂັນກິລາຕີຄີ ຝ່າຍປະຊາຊົນເອົາຊະນະຝ່າຍພະນັກງານທີ່ 9-8 ປະຕູ ໃນງານບຸນພະທາດຫຼວງ ປີ 2026



ການແຂ່ງຂັນກິລາຕີຄີ ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 24 ພະຈິກນີ້, ທີ່ບໍລິເວນເດີ່ນພະທາດຫຼວງ ນະຄອນຫຼວງວຽງຈັນ (ນວ) ລະຫວ່າງຝ່າຍປະຊາຊົນ ແລະ ຝ່າຍພະນັກງານ-ລັດຖະກອນ ໂດຍມີທ່ານ ໂພຄຳ ໄຊຍະສອນ ຮອງປະທານຄະນະກຳມະການປົກຄອງ ນວ, ທ່ານ ນາງ ວິໄລວອນ ຈັນທະລາຕີ ຮອງປະທານຄະນະກຳມະການປົກຄອງ ນວ, ພ້ອມດ້ວຍການນຳພັກ-ລັດ, ພະນັກງານ-ລັດຖະກອນ, ປະຊາຊົນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມຢ່າງເປັນຂະບວນຟົດຟື້ນ.

ກ່ອນການແຂ່ງຂັນມີພິທີນຳເອົາລູກຄີ ແຫ່ອ້ອມລານພະທາດຫຼວງ 3 ຮອບ. ກວານຈ້ຳປະຈຳບ້ານທາດຫຼວງໄດ້ພາຄະນະຝ່າຍພະນັກງານ ແລະ ຝ່າຍປະຊາຊົນຂຶ້ນໄປຄາຣະວະ ກາບໄຫວ້ບອກກ່າວ. ຈາກນັ້ນ, ແຫ່ຂະບວນເພື່ອນຳໄປທີ່ລານເດີ່ນພະທາດຫຼວງ ຊຶ່ງແບ່ງອອກເປັນ 2 ຝ່າຍຄື: ຝ່າຍຂອງປະຊາຊົນ ແລະ ຝ່າຍຂອງພະນັກງານ-ລັດຖະກອນ ໂດຍໃຊ້ເວລາການແຂ່ງຂັນອອກເປັນ 2 ເວລາຄື: ເວລາທຳອິດ 25 ນາທີ ແລະ ເວລາຫຼັງ 25 ນາທີ ສ່ວນຈຳນວນຂອງແຕ່ລະຝ່າຍປະມານ 20-25 ຄົນ.

ຜ່ານການແຂ່ງຂັນຜົນປາກົດວ່າ: ຝ່າຍຂອງປະຊາຊົນ ສາມາດເອົາຊະນະຝ່າຍຂອງເຈົ້າໜ້າທີ່ທາງການ 9 ຕໍ່ 8 ປະຕູ ເຊິ່ງປົ່ງບອກເຖິງຄວາມສັກສິດ, ຕາມການເຊື່ອຖືກັນມາຕັ້ງແຕ່ບຸຣານນະການ ຊຶ່ງຜູ້ຊີ້ຄຸນນະວຸດບຸຣານລາວເພີ່ນກ່າວວ່າ: ຖ້າປີໃດ ການແຂ່ງຂັນຕີຄີ ຝ່າຍປະຊາຊົນເອົາຊະນະ ຝ່າຍພະນັກງານ-ລັດຖະກອນ ໄດ້ ບ້ານເມືອງຈະຢູ່ເຢັນເປັນສຸກ ໝາຍເຖິງ ການແຂ່ງຂັນຕີຄີ ຝ່າຍປະຊາຊົນຍັງເຂັ້ມແຂງ ສາມາດເອົາຊະນະຝ່າຍພະນັກງານ ເປັນການປົ່ງບອກເຖິງການສ່ຽງຫວາຍຂອງຄົນບຸຣານ ບ້ານເມືອງຈະບໍ່ອຶດເຂົ້າ ບໍ່ອຶດປາ ມີເຂົ້າເຕັມນາ ປາເຕັມໜອງ ບ້ານເມືອງມີຄວາມສະຫງົບປອດໄພ, ການທຳມາຫາກິນ ມີແຕ່ທ່ວງທ່າທີ່ດີຂຶ້ນ, ບ້ານເມືອງຈະສະຫງົບສຸກ ຮົ່ມເຢັນ ເຂົ້າປາອາຫານອຸດົມສົມບູນພູນສຸກ, ຜົນຜະລິດຈຶ່ງອຸດົມດັ່ງນີ້ແລ.

ເມື່ອການແຂ່ງຂັນຕີຄີສຳເລັດແລ້ວ ກໍໄດ້ແຫ່ລູກຄີກັບຄືນ ແລະ ອັນເຊີນລູກຄີໄວ້ບ່ອນເກົ່າ ຊຶ່ງເມື່ອກ່ອນ ຕອນທີ່ປະເທດລາວເຮົາຍັງເປັນຣາຊະອານາຈັກລາວນັ້ນ ບຸນນະມັດສະການພະທາດຫຼວງ ແຫ່ງນີ້ ເພີ່ນຍັງຈັດໃຫ້ມີການແຂ່ງມ້າ, ແຂ່ງຊ້າງ, ຍັງມີກິລາຕີໝໍ້, ຫຼິ້ນໝາກເດີ, ຫຼິ້ນໝາກຜີຕາແຕກ ເຊືອກດຶງແອວ, ເສັງກອງ, ລຳເລື່ອງ, ຂັບລຳ ແລະ ອື່ນໆ ເພື່ອຄຶບງັນ. ສ່ວນອາຫານການກິນ ກໍຈະມີເຂົ້າຫຼາມ, ປີ້ງໄກ່, ເຂົ້າປຸ້ນ, ເຂົ້າປາດ, ເຂົ້າຕົ້ມ, ເຂົ້າໃໝ່, ບັນດາປະເພນີທີ່ມີການເສັງ (ແຂ່ງຂັນ) ດັ່ງກ່າວທີ່ເວົ້າມານີ້. ມາຮອດປັດຈຸບັນ ຍັງເຫຼືອແຕ່ເສັງຕີຄີ (ປັດຈຸບັນ ເອີ້ນວ່າການແຂ່ງຂັນກິລາຕີຄີ) ເຊິ່ງ ລູກຄີ ແມ່ນເຮັດດ້ວຍເຫງົ້າໄມ້ໄຜ່ຕັນ, ທາສີຄຳ ແລະ ໄມ້ຄີນັ້ນ ແມ່ນເຮັດດ້ວຍໄມ້ໄຜ່ທີ່ທາສີ ແບ່ງອອກເປັນ 2 ຝັ່ງຄື: ທາສີຄຳ ແລະ ທາສີເງິນ.

(ແຫຼ່ງຂ່າວ: ວຽງຈັນໃໝ່)

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນອັງຄານ 24 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝຸນໃຊ້ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.